<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2014 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປື້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6, 7
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6, 7
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11, 12, 13, 14 and Easter
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13, 14 and Easter
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 1</u>

## ຜູ້ຍິງແລະເດັກນ້ອຍກ່ອນ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ອົບພະຍົບ 1:8—2:10

**<u>ພູມຫລັງຂອງພຣະຄັມພີ:</u>** ອົບພະຍົບ 1:1—2:10

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ເດັກນ້ອຍທັງຫລາຍປະເຊີນກັບຄວາມໂຫດຮ້າຍແລະຄວາມຕາຍ, ຜູ້ເປັນແມ່ກໍມີການຕໍ່ຕ້ານໃນການກະທຳປ່າເຖື່ອນຢ່າງນີ້ ຊຶ່ງຖືວ່າເປັນແຜນການຂອງມານ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ຍັງມີທ່າທີໃດອີກແດ່ບໍ່ ທີ່ພວກເຮົາທັງຫລາຍຄວນຈະຕໍ່ສູ້ເພື່ອເດັກນ້ອຍໃນປັດຈຸບັນນີ້

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະອະທິບາຍເຖິງການກະທຳອັນໂຫດຮ້າຍທາຣຸນຕໍ່ເດັກນ້ອຍແລະຜູ້ຍິງທີ່ກະສັດຟາຣາໂອກະທຳຢູ່

### <u>ແຜນການສິດສອນສຳລັບຄຣູ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ</u>

1. ກ່ອນຈະເລີ່ມບົດຮຽນ ຄຣູຈະນຳພານັກຮຽນຄົ້ນຄວ້າຫາວ່າຜູ້ໃດເຄີຍຊ່ວຍຊີວິດຂອງຄົນ ຫລືບໍ່ກໍໃຫ້ຫາວ່າມີໃຜແດ່ທີ່ເຄີຍສ່ຽງຕໍ່ອັນຕະລາຍ ຊ່ວຍຊີວິດຄົນອື່ນໄວ້ແດ່. ໃນປວັດສາດຜ່ານມາເຄີມີໃຜແດ່ທີ່ທ່ານເຄີຍໄດ້ຍິນ. ສົນທະນາເຖິງການປົກປ້ອງຊີວິດຂອງເດັກນ້ອຍ.

2. ຫລັງຈາກນັ້ນກໍໃຫ້ຄຣູເຊື່ອມໂຍງເຂົ້າຫາບົດຮຽນ ແລະໂຄ້ງເຂົ້າຫາຫົວຂໍ້ຂອງບົດຮຽນທີ່ຈະເວົ້າໃນວັນນີ້ ເຣື່ອງຜູ້ຍິງຜູ້ນຶ່ງຊຶ່ງສ່ຽງຊີວິດຂອງຕົນເອງເພື່ອຊ່ວຍຊີວິດລູກຂອງຕົນເອງໃວ້.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>

3. ໃຫ້ຄົນທີ່ສມັກໃຈອ່ານ ອົບພະຍົບ 1:6-14  ແລ້ວວາງຄຳຖາມ: ເປັນຫຍັງກະສັດຟາຣາໂອຈຶ່ງເປັນຄົນສົນໃຈແລະກະວົນກະວາຍຕໍ່ການຂຍາຍປະຊາກອນຂອງຊາວອິສຣາເອນແທ້?  ໃຫ້ເວລານັກຮຽນອອກຄຳຄິດເຫັນ. ເປັນຫຍັງຈຶ່ງຢາກໃຫ້ມີຈຳນວນຈຳກັດ, ຖ້າເປັນດັ່ງນັ້ນ ເປັນຫຍັງບໍ່ຂັບໄລ່ພວກເຂົາໃຫ້ອອກນອກປະເທດໄປໂລດ?

4. ໃຫ້ອີກຄົນນຶ່ງອ່ານ ອົບພະຍົບ 1:15-22 ສົນທະນາຄຳຖາມທີນຶ່ງໃນເຈັ້ຍບົດຮຽນ ເປັນຫຍັງຟາຣາໂອຈຶ່ງຫວັງຢາກຂ້າແຕ່ເດັກນ້ອຍຜູ້ຊາຍ ແທນທີ່ຈະຂ້າຜູ້ຊາຍໃຫຍ່ໂລດ? ໃຫ້ອະທິບາຍ ຄຳສັ່ງໃຫ້ຂ້າເດັກນ້ອຍຜູ້ຊາຍ ແລະຕໍ່ຄວາມເຊື່ອຂອງພຣະເຈົ້າ. ພຣະເຈົ້າຊົງອວຍພອນຄົນອິສຣາເອນວ່າ ຈົ່ງມີປະຊາກອນເຕັມແຜ່ນດິນ ແລະຈົ່ງທະວີອອກໄປ (ປຖກ. 35:11) ຟາຣາໂອ ບໍ່ແມ່ນແຕ່ຂັດຄຳສັ່ງຂອງພຣະເຈົ້າເທົ່ານັ້ນ ແຕ່ຍັງຕໍ່ຕ້ານຄົນຂອງພຣະເຈົ້າອີກດ້ວຍ.

5. ສົນທະນາ ຄຳຖາມ 2 ແລະ 3 ຢູ່ໃນເຈັ້ຍບົດຮຽນ. ເປັນຫຍັງຟາຣາໂອຈຶ່ງສັ່ງໃຫ້ນາງຜະດຸງຄັນເປັນຜູ້ຂ້າເດັກນ້ອຍ? ເປັນຫຍັງເພິ່ນຈຶ່ງບໍ່ໃຫ້ທະຫານໄປຂ້າໂລດ? ລໍຖ້າຟັງຄຳຕອບຈາກນັກຮຽນ. ເມື່ອໄດ້ຮັບຄຳສັ່ງແລ້ວ ພວກນາງຜະດຸງຄັນມີຄວາມຄິດຢ່າງໃດ ຕໍ່ຄວາມເຊື່ອໃນພຣະເຈົ້າຂອງພວກເຂົາ? ພວກເຂົາມີການສ່ຽງຕໍ່ພັຍອັນຕະລາຍຫຍັງແດ່? ເມື່ອເວລາພວກເຮົາຫາກຕົກຢູ່ໃນສະພາບການຢ່າງນີ້ ຄວາມເຊື່ອໃນພຣະເຈົ້າຂອງພວກເຮົາຈະເປັນຢ່າງໃດ?

6. ໃຫ້ຄົນນຶ່ງທີ່ສມັກໃຈອ່ານ (ອົບພະຍົບ 2:1-10) ສົມທຽບນາງໂຈເຄເບັດ (ແມ່ຂອງໂມເຊ) ກັບພວກນາງຜະດຸງຄັນ ໃຜມີຄວາເຊື່ອກວ່າກັນ? ຄວາມກ້າຫານອາດຈະມີຄືກັນ ແຕ່ວ່າການປະຕິບັດມີຄວາມແຕກຕ່າງກັນ. ສົນທະນາກ່ຽວກັບການປ້ອງກັນຂອງແມ່ແລະຜູ້ອື່ນ ເປັນຢ່າງໃດ?

7. ສົນທະນາເຖິງໜ້າທີ່ຂອງລູກສາວຟາຣາໂອເຮັດຫຍັງແດ່? ເປັນຫຍັງລາວຈຶ່ງສົນໃຈໃນຊີວິດຂອງໂມເຊ? ເວົ້າເຣື່ອງການເອີ້ນໃຊ້ຂອງພຣະເຈົ້າໃນສມັຍນັ້ນວ່າເປັນຢ່າງໃດ? ພຣະເຈົ້າມີຈຸດປະສົງຫຍັງໃນຕົວຂອງໂມເຊ?

## <u>ນຳບົດຮຽນໄປໃຊ້ໃນ</u>

ຊຽນລາຍລະອຽດລົງໄປວ່າ ຖ້າທ່ານເຫັນໃຜຄົນນຶ່ງທີ່ຫາກຕີລູກ, ຫລືຂົ່ມເຫັງລູກ, ຫລືບໍ່ໃຫ້ໂອກາດແກ່ລູກທ່ານຈະເຮັດຢ່າງໃດແດ່?

ກ. ມີຜູ້ນຶ່ງກຳລັງຕີລູກຢູ່ (ຕ້ອງລາຍງານຕຳຣວດ)
ຂ. ເມື່ອເຫັນເດັກໜຸ່ມກຳລັງຈະຂ້າຕົວເອງຕາຍ (ຕ້ອງໄປສະກັດກັ້ນໄວ້ ຕາມຄວາມສາມາດ)
ຄ. ເວລາເຫັນເດັກກຳລັງຈະຖືກຣົດຕຳເດ ທ່ານຈະເຮັດຢ່າງໃດ? (ຕ້ອງແລ່ນໄປຊ່ວຍເດັກນ້ອຍ)
ແລະມີອັນໃດອີກແດ່…………..

8. ຈະເຮັດຢ່າງໃດກໍຕາມ ຕ້ອງຄິດວ່າເດັກມີຄວາມຕ້ອງການບໍ່ເໝືອນກັນ. ເຮົາຄົນດຽວອາດຈະຕອບສນອງທຸກຢ່າງບໍ່ໄດ້ຕ້ອງອາສັຍສັງຄົມ…..

9. ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 2</u>

## ຈົ່ງຮັບຟັງການຮຽກເອີ້ນ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ອົບພະຍົບ 3:1-14; 4:1-15

**<u>ພູມຫລັງຂອງພຣະຄັມພີ:</u>** ອົບພະຍົບ 2:11—4:17

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຈົ້າມີພຣະປະສົງຈະຮຽກເອີ້ນເອົາໂມເຊມາເປັນຜູ້ຮັບໃຊ້ພຣະອົງ, ໂດຍບໍ່ມີຂໍ້ແມ້ໃດໆທັງສິ້ນ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພວກເຮົາຍັງມີຂໍ້ແມ້ອັນໃດແດ່ບໍ່ ເພື່ອຈະຕໍ່ຕ້ານແລະຫລີກລ້ຽງການຮຽກເອີ້ນຂອງພຣະເຈົ້າ

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະສຶກສາຫາບົດຮຽນໃນຕົວຂອງຂ້ອຍເອງ ກ່ຽວກັບການຮຽກເອີ້ນໂມເຊຂອງພຣະເຈົ້າຢູ່ທີ່ພຸ່ມໄມ້ທີ່ໄຟກຳລັງໄໝ້ຢູ່.

### <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

(1) ຄຣູຈະນຳສິ່ງທີ່ແຂງມາເພື່ອນັກຮຽນຈະໄດ້ຮຽນຮູ້ເຊັ່ນ: ວອນນັດ, ໃນໝາກອາໂວກາໂດ້, ລູກກອຟ ແລະຕໍ່ໆໄປ. ຖາມນັກຮຽນ ມີໃຜບໍ່ມີ່ຈະສາມາດໃຊ້ມືເປົ່າ ທັບສິ່ງເຫລົ່ານີ້ແຕກໄດ້ບໍ່? ຄົງຈະບໍ່ມີໃຜຈະຢາກທົດລອງດອກ. ແຕ່ວ່າຖ້າມີຄົນຢາກທົດລອງກໍໃຫ້ເຂົາທົດລອງ. ອະທິບາຍວ່າ ເມື່ອເວລາພົບຂອງແຂງຢ່າງນີ້ ພວກເຮົາຕ້ອງໄດ້ໃຊ້ເຄື່ອງມືພິເສດ.

(2) ຫັນເຂົ້າມາຫາພຣະຄັມພີ ທີ່ຈະສຶກສາໃນວັນນີ້ ໂມເຊພະຍາຍາມປະຕິເສດພຣະເຈົ້າ, ແຕ່ພຣະເຈົ້າກໍຕ້ອງການທີ່ຈະໃຊ້ເພິ່ນ ເພາະເພິ່ນເປັນຜູ້ທີ່ເໝາະສົມກັບວຽກງານນີ້.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>

(3) ໃຫ້ເລົ່າເຣື່ອງໂມເຊ ໂດຍຫຍໍ້ໆ ຈົນມາເຖິງຕອນທີ່ມາລ້ຽງແກະໃຫ້ພໍ່ເຖົ້າຢູ່ເທິງພູເຂົາຊີນາຍ (ອົບພະຍົບ 11:-25) ວາງຄຳຖາມ ວ່າໂມເຊເປັນຄົນຢ່າງໃດ ແລະມີນິດສັຍຢ່າງໃດ? ກ່ອນທີ່ລາວຈະພົບພຣະເຈົ້າຫລືວ່າ ກ່ອນທີ່ຈະມາເຖິງບ່ອນໄຟໃໝ້ພຸ່ມໄມ້ນີ້.

(4) ຕຽມຕົວກ່ອນທີ່ຈະເລີ້ມບົດຮຽນ ໃຫ້ຕັດເຈັ້ຍເຈັດໃບຂນາດກ້ອນດິນຈີ່. ແລ້ວກໍໃຫ້ຂຽນຂໍ້ພຣະຄັມພີໃສ່: ອົບພະຍົບ 3:3-4; ອົບພະຍົບ 3:5-7; ອົບພະຍົບ 3:11; ອົບພະຍົບ 3:13; ອົບພະຍົບ 4:1; ອົບພະຍົບ 4:10; ແລະ ອົບພະຍົບ 4:13

(5) ໃຫ້ຄົນນຶ່ງອ່ານ ພຣະທັມອົບພະຍົບ ບົດທີ 3:1-4. ນໍາພານັກຮຽນຄິດຫາວ່ານິດສັຍຂອງໂມເຊເປັນແບບໃດ? ຊອກຫາຄໍາເວົ້າທີ່ເໝາະສົມ.

(6) ໃຫ້ອີກຄົນນຶ່ງອ່ານ ອົບພະຍົບ 3:5-7 ຖາມຄໍາຖາມຢ່າງດຽວກັນກັບຂໍ້ 5. ແລ້ວກໍຂຽນລົງໃສ່ເຈັ້ຍແລ້ວເອົາໄປຕິດໄວ້ຝາ.

(7) ອີກຄົນນຶ່ງອ່ານອີກ ອົບພະຍົບ 3:7-12 ຖາມຄໍາຖາມແບບເກົ່າ ແລ້ວກໍຂຽນລົງໃສ່ເຈັ້ຍແລ້ວກໍເອົາໄປຕິດໃສ່ຝາຍອງກັນຂຶ້ນຄືເກົ່າ. (ກ້ອນທີ ສາມ)

(8) ເຮັດຄືເກົ່າ ສໍາລັບກ້ອນທີ ສີ່ ໃຫ້ອ່ານ 3:13-20 ; ກ້ອນທີຫ້າໃຫ້ອ່ານ 4:1-9; ກ້ອນທີຫົກ ໃຫ້ອ່ານ 4:10-12; ແລະກ້ອນທີເຈັດໃຫ້ອ່ານ 4:13-17

(9) ເລີ້ມຕົ້ນແຕ່ກ້ອນທີ່ຢູ່ລຸ່ມທີ່ສຸດ ໃຫ້ອ່ານປໂຍກທີ່ຂຽນໄວ້ທີ່ກ່າວເຖິງນິດສັຍຂອງໂມເຊ. ໃຫ້ຄົນນຶ່ງຕອບແລະອະທິບາຍເຖິງທ່າທີຂອງໂມເຊດ້ວຍ. ແລະແລ້ວກໍໃຫ້ອ່ານແຕ່ລະກ້ອນໆໄປ. ທຸກຢ່າງທີ່ໂມເຊຫາຂໍ້ຫລີກລ້ຽງ ພຣະເຈົ້າກໍໂຕ້ຕອບໃຫ້ທັນທີ.

(10) ສົນທະນາອີກວ່າເປັນຫຍັງພຣະເຈົ້າຈຶ່ງຕ້ອງການໂມເຊ ແທນທີ່ຈະໄປຊອກຫາຄົນອື່ນ?

## <u>ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

(11) ອີງຕາມການສົນທະນາກັນແລ້ວ ຄຣູຈະວາງຄໍາຖາມວ່າ ທຸກວັນນີ້ເດແມ່ນຫຍັງຄືສິ່ງທີ່ຫຍຸ້ງຍາກທີ່ສຸດສໍາລັບຄຣິສຕຽນ? ແລະແມ່ນຫຍັງຄືຂໍ້ເລີກລັບໃນການເຊື່ອຟັງໃນພຣະເຈົ້າ?

(12) ຄຣິສຕຽນທຸກວັນນີ້ ມີຂໍ້ອ້າງອີງຫຍັງແດ່ ເພື່ອຈະຫລີກລ້ຽງການທໍາງານຂອງພຣະເຈົ້າ? ໃນເມື່ອພວກເຮົາມີຄົບທຸກຢ່າງແລ້ວໃນປະເທດນີ້, ພວກເຮົາຍັງມີຫຍັງອ້າງອີກແດ່?

(13) ອ້ອນວອນອະທິຖານກ່ອນທີ່ຈະເຂົ້ານະມັສການພຣະເຈົ້າ ຂໍພຣະເຈົ້ານໍາພາທ່ານທຸກຄົນ.

*ບພ*

# ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 3</u>

## ພລັງອຳນາດຂອງພຣະເຈົ້າ, ເພື່ອຄົນຂອງພຣະເຈົ້າ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>:** ອົບພະຍົບ 5:1-2; 6:1-8; 7:1-5, 14-18; 8:1-3, 16, 20-21; 9:1-4, 8-9, 13-18, 25-26; 10:3-11, 21-22, 28-29; 11:1-5

**<u>ພູມຫລັງຂອງພຣະຄັມພີ</u>:** ອົບພະຍົບ ບົດທີ 5 ຫາ ບົດທີ 11

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>:** ຕໍ່ການຕໍ່ຕ້ານຂັດຂວາງຂອງກະສັດຟາຣາໂອ, ພຣະເຈົ້າໄດ້ສຳແດງຣິດອຳນາດຂອງພຣະອົງຫລາຍຢ່າງເພື່ອຈະປົດປ່ອຍຄົນຂອງພຣະອົງທີ່ຖືກກົດຂີ່ຂົ່ມເຫັງຢູ່.

**<u>ຄຳຖາມເພື່ອການຄົ້ນຄວ້າ</u>:** ຕໍ່ຄົນເຮັບເຣີ ພວກເຂົາມີທ່າທີຢ່າງໃດເມື່ອພຣະອົງກ່າວວ່າພຣະອົງຊົງເປັນຫ່ວງພວກເຂົາ?

**<u>ຈຸດປະສົງຂອງບົດຮຽນນີ້</u>:** ເພື່ອຈະອະທິບາຍເຖິງການສຳແດງການອັສຈັນວ່າມີຄວາມໝາຍຢ່າງໃດແດ່.

## <u>ແຜນສຳລັບການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ມີຜູ້ໃດແດ່ບໍ່ທີ່ເຄີຍໄດ້ເບິ່ງ ດີວີດີ ເຣື່ອງພຣະບັນຍັດ 10 ປະການ? ເພາະເຣື່ອງນີ້ເປັນເຣື່ອງທີ່ກ່ຽວກັບການອົບພະຍົບຂອງຊາວອິສຣາເອນໂດຍສະເພາະ.

2. ຖາມນັກຮຽນວ່າມີພັຍພິບັດຈັກຢ່າງທີ່ພວກເຮົາຈື່ໄດ້ ວ່າພຣະເຈົ້າສົ່ງມາເຖິງຄົນອີຢິບຢ່າງໃດ?

3. ຫັນເຂົ້າມາຫາບົດຮຽນຂອງພວກເຮົາໃນວັນນີ້ ໃນດີວີດີມີຈັກພັຍພິບັດ ເບິ່ງຄືວ່າເປັນການສະແດງເອົາ ແຕ່ວ່າຖ້າພຣະເຈົ້າເຮັດແລ້ວບໍ່ແມ່ນການສະແດງ ແມ່ນຕົວຈິງ ແລະກໍບໍ່ມີຜູ້ໃດເຮັດມາກ່ອນ ແລະກໍເຮັດບໍ່ໄດ້ອີກ, ບໍ່ມີການລວງຕາ ບໍ່ມີການໃຊ້ແກ້ວກະຈົກເປັນສາກບັງໜ້າ. ທຸກສິ່ງຢ່າງອອກມາຈາກສົບພຣະທັດຂອງພຣະເຈົ້າເອງ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

4. ໃຫ້ຄົນນຶ່ງທີ່ສມັກໃຈອ່ານພຣະທັມອົບພະຍົບ 5:1-2. ສົນທະນາກ່ຽວກັບຫົວໃຈຂອງຟາຣາໂອ ແລະ ເປັນຫຍັງເພິ່ນຈຶ່ງບໍ່ຮັບຮູ້ໂມເຊ? ເບິ່ງໃນຄຳຖາມທີນຶ່ງເຈັ້ຍບົດຮຽນ. ເປັນຫຍັງກະສັດຈຶ່ງໃຫ້ຄົນເຂົ້າມາໃນພຣະຣາຊວັງແບບງ່າຍໆ ແລະກໍເວົ້າກັນແບບທັມມະດາ ໂດຍບໍ່ມີການລົງໂທດຫຍັງເລີຍ?

5. ໃຫ້ອີກຄົນນຶ່ງອ່ານພຣະທັມອົບພະຍົບ 6:1-8 ຈຶ່ງເຕືອນນັກຮຽນວ່າ ຄຳວ່າພຣະເຈົ້າ ບາງຄັ້ງກໍເປັນພຣະເຈົ້າທັມມະດາ ເປັນພຣະເຈົ້າປອມ. ຖ້າເປັນພາສາອັງກິດແລ້ວຈະເຫັນຄວາມແຕກຕ່າງງ່າຍຂຶ້ນ ຄື G ໃຫຍ່ແມ່ນພຣະເຈົ້າອົງດຽວທ່ຽງແທ້ ແລະ g ນ້ອຍແມ່ນພຣະເຈົ້າປອມ, ທຽມເທັດ . ໃນພຣະຄັມພີເດີມ ຄຳວ່າພຣະເຈົ້າຈະເອີ້ນຊື່ຂອງພຣະອົງວ່າ ຢາເວ YAHWEH

6. ເຊີນໃຫ້ທຸກຄົນອອກຄຳຄິດເຫັນ ວ່າພຣະເຈົ້າຊົງໝາຍຄວາມວ່າຢ່າງໃດ ອົບພະຍົບ 6:5 ເວລາພຣະອົງຊົງຕັກເຕືອນໃຫ້ລະລຶກເຖິງຄຳສອນຂອງພຣະອົງ ພຣະອົງວ່າຢ່າງໃດແດ່. ຖາມ: ພຣະອົງຊົງລືມຄຳໝັ້ນສັນຍາທີ່ໄດ້ໃຫ້ແກ່ບັນພະບຸຣຸດຂອງອິສຣາເອນບໍ່? ເປັນຫຍັງພຣະເຈົ້າຈຶ່ງໃຊ້ເວລາດົນນານແທ້ ເຖິງ 430 ປີ ຈຶ່ງປາກົດອອກມາ.

7. ຢູ່ໃນກະດານ ໃຫ້ຂຽນພັຍພິບັດ ລຽນກັນລົງມາ ນຳພານັກຮຽນອ່ານພຣະຄັມພີແລ້ວກໍຂຽນລົງມາແຕ່ລະຢ່າງ (ອົບພະຍົບ ບົດທີ 6-11)

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ຄົນເຮັບເຣີແລະຄົນອີຢິບເຂົ້າໃຈການກະທຳນີ້ເປັນການສຳແດງຂອງພຣະເຈົ້າຢ່າງໃດ?

9. ທຸກວັນນີ້ເດ, ພຣະເຈົ້າສຳແດງຢ່າງໃດໃຫ້ແກ່ມະນຸດພວກເຮົາ ວ່າພຣະອົງຊົງເປັນພຣະເຈົ້າຂອງອັບຣາຮາມ ຂອງອີຊາກ ແລະຂອງຢາໂຄບ?

10. ຄຳຖາມທີ 3 ແລະ ທີ 4 ໃນເຈັ້ຍບົດຮຽນ ຄົນອິສຣາເອນສົງສັຍໂມເຊກ່ອນທີ່ຈະພົບພຣະເຈົ້າ, ແຕ່ຫລັງຈາກອອກຈາກອີຢິບແລ້ວກໍຍັງສົງສັຍໂມເຊຢູ່ ເປັນຫຍັງ?

11. ສມັຍນີ້ພຣະເຈົ້າບໍ່ໄດ້ສົ່ງພັຍພິບັດມາອີກແລ້ວ ແຕ່ພຣະອົງຊົງຊ່ວຍຄົນທີ່ມີຄວາມເຊື່ອຫລືຄຣິສຕຽນຢ່າງໃດ? ສົນທະນາ.

12. ນຳພານັກຮຽນອ້ອນວອນອະທິຖານ ຂໍການຊົງນຳຂອງພຣະເຈົ້າ ໃນທຸກແງ່ທຸກມຸມຂອງຊີວິດ. ເພື່ອພຣະອົງຈະໄດ້ເປີດຕາໃຈ ແລະເຂົ້ານະມັສການພຣະເຈົ້າ.

*ບພ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 4
## ກິນເຂົ້າຟ້າວກ່ອນອອກເດີນທາງຢ່າງລຳບາກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 12:1-14, 24-27; 13:8-9

**ພູມຫລັງຂອງພຣະຄັມພີ:** ອົບພະຍົບ 12:1-13:16

**ຈຸດສຳຄັນຂອງບົດຮຽນນີ້:** ດ້ວຍການສລອງປັສຄາແລະກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ພວກອິສຣາເອັນໄດ້ສະແດງຄວາມເຊື່ອຢ່າງແທ້ຈິງໃນພຣະເຈົ້າຜູ້ໄຖ່ພວກເຂົາອອກຈາກການເປັນທາດ.

**ຄຳຖາມເພື່ອການຄົ້ນຄວ້າ:** ເມື່ອລູກຂອງທ່ານຖາມເຖິງຄວາມໝາຍຂອງຄວາມເຊື່ອໃນພຣະເຈົ້າ, ທ່ານຈະຕອບເຂົາແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອອະທິບາຍເຖິງຄວາມໝາຍຂອງງານສລອງປັສຄາແລະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງນັ້ນແມ່ນການເວົ້າເຖິງຄວາມໝາຍຂອງຄວາມເຊື່ອຂອງຂ້າພະເຈົ້າເອງ.

**ເພື່ອຄວາມເຂົ້າໃຈ:** ພຣະເຈົ້າໄດ້ສະຖາປະນາພິທີຢ່າງນີ້ເພື່ອເປັນການເຕືອນພວກອິສຣາເອັນວ່າພຣະອົງມີອຳນາດຊ່ອຍພວກເຂົາ ແລະພຣະອົງຢາກໃຫ້ໃຊ້ເວລານີ້ສະແດງຄວາມເຊື່ອໃນພຣະອົງດ້ວຍການເຂົ້າຮ່ວມພິທີນີ້ດ້ວຍຄວາມລະມັດລະວັງ.

## ບົດນຳ

ເຣື່ອງສລອງປັສຄາໃນພຣະຄັມພີເດີມແມ່ນເຣື່ອງພຣະເຈົ້າໄດ້ຊ່ອຍໃຫ້ພວກອິສຣາເອັນອອກຈາກການເປັນທາດຂອງພວກເອຢິບ. ພຣະເຈົ້າໄດ້ຍິນສຽງຈົ່ມທຸກຂອງເຂົາແລະພຣະອົງຊົງຈຳຄຳສັນຍາຕໍ່ປູ່ຍ່າຕາຍາຍຂອງພວກເຂົາ. (ອົບພະຍົບ 2:23-25). ຫລັງຈາກນັ້ນພຣະເຈົ້າໄດ້ເອີ້ນເອົາຜູ້ນຳຄືໂມເຊ ແລະພຣະເຈົ້າທຳສົງຄາມຕໍ່ສູ້ກະສັດຟາຣາໂອແລະພວກເອຢິບຄືພຣະເຈົ້າໄດ້ສົ່ງພັຍພິບັດຫລາຍໆຢ່າງມາຍັງພວກເອຢິບ. ທີ່ສຸດພຣະເຈົ້າບອກວ່າຈະສົ່ງເຫດຮ້າຍຄັ້ງທີສິບຊຶ່ງຮ້າຍແຮງຫລາຍກວ່າໝູ່ ຈະມີຄາຕະກອນໄປໃນຖ້າມກາງພວກເອຢິບແລະເອົາຊີວິດລູກຊາຍກົກແຕ່ລະຄອບຄົວ.

ພຣະຄັມພີອາທິດນີ້ໄດ້ກ່າວເຖິງພິທີກິນອາຫານທີ່ພຣະເຈົ້າຕັ້ງໄວ້ຊຶ່ງເປັນສັນຍາລັກວ່າພຣະອົງຈະຊ່ອຍພວກອິສຣາເອັນ. ພວກອິສຣາເອັນຕ້ອງຖືພິທີນີ້ໃຫ້ດີໃນຄືນເຫດຮ້າຍເກີດຂຶ້ນແລະຫລັງຈາກພວກເຂົາໄດ້ຮັບເສຣີພາບ. ໃນພຣະຄັມພີໃໝ່ກໍກ່າວດັ່ງນີ້ເໝືອນກັນ. ນຶ່ງ, ອົງພຣະເຢຊູຖືກຂຶ້ນສານແລະຖືກຄຶງທີ່ໄມ້ກາງແຂນກໍແມ່ນມີພາກສ່ວນໃນງານສລອງປັສຄາ. ສອງ, ອົງພຣະເຢຊູໄດ້ໃຊ້ສິ່ງປະກອບໃນປັສຄາ, ຄືເຂົ້າ

ຈີ່ບໍ່ມີເຊື້ອແປ້ງແລະນ້ຳອະງຸ່ນ ເພື່ອພຣະອົງຈະໄດ້ສະຖາປະນາສິນມະຫາສນິດ. ເໝືອນກັບປັສຄາແມ່ນການຊົງໄຖ່ພວກອິສຣາເອັນໃຫ້ພົ້ນຈາກການເປັນທາດຈາກເອຢິບ, ສິນມະຫາສນິດແມ່ນການສລອງການໄຖ່ອັນຍິ່ງໃຫຍ່ເພື່ອມະນຸດທົ່ວໂລກດ້ວຍການສິ້ນພຣະຊົນແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດເຈົ້າ. ທັງສອງປັສຄາແລະສິນມະຫາສນິດແມ່ນສິ່ງທີ່ພຣະເຈົ້າກະທຳເພື່ອມະນຸດ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ແນະນຳຫ້ອງຮຽນຈັດໃຫ້ພິທີການຕ່າງໆຊຶ່ງມີສັນຍາລັກເຊັ່ນ: (ສິນບັບຕິສະມາ ສິນມະຫາສນິດ, ພິທີແຕ່ງງານ) ບອກໃຫ້ແຕ່ລະຄົນສົນທະນາເຖິງຄວາມໝາຍອັນສຳຄັນຂອງແຕ່ລະຢ່າງໃນສາສນາແນວໃດ?

2. ອະທິບາຍວ່າໃນພຣະຄັມພີພຣະເຈົ້າໄດ້ແຕ່ງຕັ້ງພິທີຫລາຍຢ່າງເຊັ່ນ: ພິທີຕັດແມ່ນໝາຍເຖິງ ພຣະເຈົ້າຊົງເລືອກໃຫ້ພວກອິສຣາເອັນເປັນຄົນແຕກຕ່າງໃນຄວາມສັມພັນກັບພຣະອົງ. ພິທີອີກອັນນຶ່ງທີ່ສຳຄັນທີ່ພຣະເຈົ້າແຕ່ງຕັ້ງແມ່ນປັສຄາ. ມັນບໍ່ເປັນພຽງການເຕືອນພວກອິສຣາເອັນວ່າພຣະເຈົ້າໄດ້ປົດປ່ອຍພວກເຂົາອອກຈາກການເປັນທາດ, ແຕ່ເພື່ອຈະຊ່ອຍໃຫ້ພວກເຮົາເຂົ້າໃຈເຖິງສິ່ງທີ່ອົງພຣະເຢຊູເຮັດເພື່ອມະນຸດຈະໄດ້ພົ້ນຈາກບາບ.

3. ໃຊ້ຄຳຖາມດັ່ງຕໍ່ລົງໄປນີ້ເພື່ອຈະສ້າງໃຫ້ມີການສົນທະນາເກີດຂຶ້ນ:
   ກ. ເປັນຫຍັງພວກອິສຣາເອັນຈຶ່ງຕ້ອງເຮັດຕາມຄຳສັ່ງຂອງພຣະເຈົ້າຢ່າງເຄັ່ງຄັດເມື່ອພວກເຮົາໄດ້ຕຽມປັສຄາ?
   ຂ. ແມ່ນຫຍັງເປັນເຣື່ອງສຳຄັນຖ້າເອົາສັດຂາຫັກມາຖວາຍ ເພາະຄົນຈະໄດ້ກິນຕອນສຸດທ້າຍຫລັງຈາກເຮັດພິທີແລ້ວ?

4. ໃຫ້ແຕ້ມໃສ່ກະດານສອງແຖວ ແຖວຊ້າຍໃຫ້ໃສ່ຊື່ວ່າ "ສິ່ງປະກອບ" ທັງຂວາ "ຄວາມສຳຄັນຂອງສັນຍາລັກ." ໃຫ້ຄົນນຶ່ງອ່ານ ອົບພະຍົບ 12:1-23 ຖ້າອ່ານເຖິງສິ່ງປະກອບໃນພິທີໃຫ້ຂຽນໃສ່ແຖວສິ່ງປະກອບ ແລະຖ້າເຫັນຄວາມສຳຄັນສັນຍາລັກໃຫ້ຂຽນໃສ່ທາງຂວາເຊັ່ນ: ແກະນ້ອຍ, ຜັກຂົມ, ເຂົ້າຈີ່ບໍ່ມີເຊື້ອແປ້ງ ແລະອື່ນໆ. ໃຫ້ແຕ່ລະຄົນອອກຄວາມເຫັນນຳກັນ.

5. ພິທີປັສຄານີ້ໄດ້ກ່ຽວຂ້ອງກັບການກະທຳຂອງພຣະເຢຊູໃນພຣະຄັມພີໃໝ່ແນວໃດ?

6. ອ່ານອົບພະຍົບ 12:24-27; 13:8-9. ເປັນຫຍັງພຣະເຈົ້າຈຶ່ງສັ່ງໃຫ້ພວກອິສຣາເອັນສິດສອນເດັກນ້ອຍຂອງຕົນໃຫ້ດີແຕ່ລະປີ? ນຳພາຫ້ອງຮຽນສົນທະນາກັນເພື່ອຊອກວິທີສອນເດັກຜູ້ຈະເປັນຜູ້ນຳໃນອະນາຄົດໃຫ້ເຂົ້າໃຈດີໃນເຣື່ອງປັສຄານີ້.

7. ທ່ານຈະອະທິບາຍຕໍ່ຄົນບໍ່ເຄີຍໄດ້ຍິນເຣື່ອງປັສຄານີ້ຢ່າງໃດ?

8. ນໍາພາສະມາຊິກໃນຫ້ອງໃຫ້ຮຽນຮູ້ແຕ່ລະຄະນະໄດ້ສລອງສິນມະຫາສນິດແຕກຕ່າງກັນແນວໃດ?

9. ອ້ອນວອນປິດ ກ່າວເຖິງສິ່ງທີ່ອົງພຣະເຢຊູໄດ້ຕາຍແລະຄືນມາຈາກຕາຍເພື່ອພວກເຮົາຈະເປັນພະຍານຕໍ່ຄົນອື່ນຜູ້ຍັງບໍ່ຮູ້ຈັກ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 5</u>

## ຄຳຖາມເຣື່ອງຄວາມເຊື່ອ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ອົບພະຍົບ 14:1-4, 10-31; 15:1-2, 20-21

**<u>ພູມຫລັງຂອງພຣະຄັມພີ:</u>** ອົບພະຍົບ 14:1-15:21

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພວກອິສຣາເອັນສືບຕໍ່ການນຳພາຂອງພຣະເຈົ້າ ພວກເຂົາສາມາດມຸ້ງໜ້າໄປ ເຖິງແມ່ນເຂົາຍັງບໍ່ເຂົ້າໃຈເຣື່ອງການໄວ້ໃຈໃນພຣະເຈົ້າ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານມີຄຳຖາມເຖິງເຣື່ອງພຣະເຈົ້າແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຊອກຫາວ່າພວກເອຢີບຍອມຮັບພຣະເຈົ້າ ແລະພວກອິສຣາເອັນໄວ້ໃຈໃນພຣະອົງ, ແລະເພື່ອຂ້າພະເຈົ້າຈະເອົາສິ່ງນັ້ນມາປະກອບໃຊ້ໃນຊີວິດປະຈຳວັນ.

**<u>ເພື່ອຄວາມເຂົ້າໃຈ:</u>** ເມື່ອພວກອິສຣາເອັນຖືກທົດລອງເຖິງຄວາມເຊື່ອ ເວລາພວກເຂົາໄດ້ຖືກລ້ອມດ້ວຍນ້ຳທະເລແລະພວກທະຫານເອຢີບໄລ່ຕິດຕາມ, ໃນທີ່ສຸດພຣະເຈົ້າກໍໄດ້ຊ່ອຍພວກເຂົາໃຫ້ພົ້ນຢ່າງອັສຈັນເພາະພວກເຂົາມີຄວາມເຊື່ອ.

## ບົດນຳ

ບົດກ່ອນໄດ້ກ່າວເຖິງພຣະເຈົ້າໄດ້ປົດປ່ອຍພວກອິສຣາເອັນອອກຈາກການເປັນທາດຂອງພວກເອຢີບ. ເຫັນວ່າການທຳສົງຄາມລະຫວ່າງໂມເຊກັບກະສັດຟາຣາໂອແມ່ນເພື່ອຢາກຮູ້ວ່າພະເຈົ້າຂອງຟາຣາໂອ ຫລືພຣະເຈົ້າພຣະຢາເວເປັນໃຫຍ່. ຕອນນີ້ພວກເຮົາຮູ້ວ່າແມ່ນໃຜເປັນໃຫຍ່ຕອນສຸດທ້າຍ ພຣະຄັມພີຕອນນີ້ໄດ້ບອກເຖິງຄວາມຍິ່ງໃຫຍ່ແລະອຳນາດຂອງພຣະເຈົ້າ.

ພວກອິສຣາເອັນໄດ້ເຫັນພະລັງອຳນາດຂອງພຣະເຈົ້າ ແຕ່ເມື່ອພວກເຂົາໄດ້ຢູ່ແຄມນ້ຳທະເລພວກເຂົາກາຍເປັນຄົນຂີ້ຢ້ານ. ພັຍພິບັດສິບຄັ້ງນັ້ນແລະຄັ້ງທີສິບແມ່ນລູກກົກຂອງພວກເອຢີບທຸກຄົວເຮືອນໄດ້ຕາຍ, ແຕ່ສ່ວນລູກຂອງອິສຣາເອັນບໍ່ມີຜູ້ໃດຕາຍຈັກຄົນ. ເຖິງປານນີ້ພວກອິສຣາເອັນຍັງບໍ່ແນ່ໃຈໃນພຣະເຈົ້າ.

ເຫດການເຫລົ່ານີ້ມີຄວາມໝາຍອັນໃດຕໍ່ພຣະເຈົ້າ? ເຫັນວ່າເປັນຄຳຖາມທີ່ຕອບຍາກຫລາຍ. ເຫດການນີ້ມີຄວາມໝາຍຫຍັງຕໍ່ພວກເຮົາ? ພຣະຄັມພີຕອນນີ້ເປັນບົດຮຽນສອນອັນໃດຕໍ່ພວກເຮົາໃນທຸກວັນນີ້?

ນີ້ເປັນປະວັດຕິສາດທີ່ພວກອິສຣາເອັນໄດ້ສລອງຂຶ້ນເພື່ອຂອບພຣະຄຸນຕໍ່ພຣະເຈົ້າເຖິງພລັງອຳນາດ ແລະຄວາມຍິ່ງໃຫຍ່ຂອງພຣະອົງ. ຜູ້ນຳທຸກວັນນີ້ຄວນໃຊ້ບົດນີ້ເປັນສິ່ງເຕືອນໃຈວ່າພຣະເຈົ້າຂອງພວກອິສຣາເອັນສາມາດເຮັດສິ່ງທີ່ມະນຸດເຮັດບໍ່ໄດ້.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

10. ກ່າວວ່າ: ບາງຄັ້ງໃນຊີວິດພວກເຮົາກໍພົບກັບຄວາມຢ້ານ ຂໍໃຫ້ທ່ານບອກສະພາບສິ່ງທ່ານຢ້ານທີ່ສຸດໃຫ້ຄົນໃກ້ຄຽງໄດ້ຍິນນຳ.

11. ຖາມວ່າ: ພວກເຮົາມີຊ່ອງທາງອອກບໍ່ເມື່ອໄດ້ພົບກັບຄວາມຢ້ານໃນຊີວິດ? ໝາຍຄວາມວ່າທ່ານເຮັດແນວໃດ? (ຄຳຕອບອາດແມ່ນ: ແລ່ນໜີ, ໄປລີ້, ອ້ອນວອນ, ຊອກຫາຄົນຜູ້ໃຫ້ກຳລັງໃຈ, ຫລືຕໍ່ສູ້ຢ່າງລູກຜູ້ຊາຍ.

12. ກ່າວວ່າ: ບາງຄັ້ງຄວາມຢ້ານຕ່າງໆນັ້ນເຮັດໃຫ້ພວກເຮົາກາຍເປັນຜູ້ໃຫຍ່. ໃນບົດຮຽນນີ້ໄດ້ກ່າວເຖິງເຣື່ອງຢ່າງນີ້.

13. ຮ້ອງຂໍໃຫ້ຜູ້ໃດຜູ້ນຶ່ງອ່ານ ອົບພະຍົບ 14:1-4 ພວກອິສຣາເອັນໄດ້ເດີນທາງໄປເລື້ອຍໆທີ່ສຸດກໍພົບທາງຕັນ. ອະທິບາຍປໂຍກທີ່ວ່າ "ເຮົາຈະເຫັນໃຈຂອງກະສັດຟາຣາໂອແຂງກະດ້າງ" (ອພຍ 14:4).

14. ກ່າວວ່າ: ປະວັດທີ່ພຣະເຈົ້າໄດ້ຊ່ອຍພວກອິສຣາເອັນຂ້າມທະເລແດງນີ້ເປັນສິ່ງທີ່ທຸກຄົນຈຳໄດ້ດີໃນພຣະຄັມພີເດີມ. ເຣື່ອງນີ້ຍັງກາຍເປັນໜັງ "ພຣະບັດຍັດສິບປະການ" ເມື່ອທ່ານໄດ້ຮູ້ປະວັດເຣື່ອງນີ້ດີ ທ່ານຄຶດວ່າພຣະເຈົ້າຮັບສະງ່າຣາສີໃນອະດີດແລະປັດຈຸບັນນີ້ແນວໃດ?

15. ກ່າວວ່າ: ຖ້າທ່ານຝັນເຫັນຄົນໄລ່ທ່ານແລະທ່ານມີຄວາມຢ້ານ ແຕ່ສ່ວນພວກອິສຣາເອັນແລ້ວພວກເຂົາໄດ້ຄາຢູ່ທະເລແດງ ແລະພວກທະຫານເອຢິບກໍໄລ່ຕິດຕາມຈະຈັບເອົາຄືນໄປເປັນທາດ. ໃຫ້ຄົນນຶ່ງອ່ານອົບພະຍົບ 14:10-12 ຊຶ່ງກ່າວວ່າ ພວກອິສຣາເອັນໄດ້ເອີ້ນຫາພຣະເຈົ້າດ້ວຍຄວາມຢ້ານ. ພວກເຂົາຕໍ່ວ່າໂມເຊ ແລະຢາກກັບຄືນໄປບ່ອນເກົ່າເພາະຄວາມຢ້ານນັ້ນ. ພວກເຂົາລືມໄປແລ້ວສິ່ງທີ່ພຣະເຈົ້າເຄີຍໄດ້ຊ່ອຍ ແລະຢາກຊອກທາງອອກດ້ວຍຕົນເອງ.
16. ກ່າວວ່າ: ໃຫ້ເບິ່ງສິ່ງທີ່ໂມເຊໄດ້ເຮັດ. ອ່ານອົບພະຍົບ 14:13-14. ຖາມວ່າ ທ່ານຄຶດວ່າໂມເຊມີຄວາມກ້າຫານແນວໃດ? (ຄຳຕອບອາດແມ່ນ ໂມເຊຈື່ສິ່ງທີ່ພຣະເຈົ້າເຄີຍຊ່ອຍມາໃນອະດີດ).

17. ຂໍໃຫ້ສາມຄົນອ່ານພຣະຄັມພີສາມຕອນເພື່ອເປັນການເຕືອນ. ອົບພະຍົບ 14:15-20, 21-25, 26-31.  ຖາມວ່າພຣະເຈົ້າໄດ້ຮັບສະງ່າຣາສີໃນສະພາບຢ່າງນີ້ແນວໃດ?

18. ຖາມວ່າ, ການອັສຈັນທີ່ພຣະເຈົ້າເຮັດນັ້ນໄດ້ສອນພວກເຮົາຢ່າງໃດ? ເປັນຫຍັງເວົ້າເຖິງການອັສຈັນເປັນສິ່ງງ່າຍກວ່າສິ່ງອື່ນທີ່ຈະເອົາມາປະກອບໃຊ້ໃນຊີວິດ?

19. ອົບພະຍົບ 15 ແມ່ນເຣື່ອງພຣະເຈົ້າຊ່ອຍພວກອິສຣາເອັນເພື່ອສອນພວກເຮົາເຖິງພຣະເຈົ້າທີ່ພວກເຮົາເຊື່ອຖື.  ຂໍໃຫ້ຄົນນຶ່ງອ່ານອົບພະຍົບ 15:1-2, 20-21.

20. ອ້ອນວອນປິດເພື່ອລູກສິດ ໃຫ້ພວກເຂົາເອົາບົດຮຽນນີ້ມາປະກອບໃຊ້ໃນຊີວິດເມື່ອພົບກັບຄວາມຢ້ານ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# <u>ບົດຮຽນທີ 6</u>
# ເຮັດໃຫ້ນ້ຳຂົມເປັນຫວານແລະຈອກເປົ່າເຕັມຫລົ້ນ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ອົບພະຍົບ 15:22—16:18

**<u>ພູມຫລັງຂອງພຣະຄັມພີ:</u>** ອົບພະຍົບ 15:22—17:7

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າທ້າທາຍໃຫ້ພວກອິສຣາເອັນມີຄວາມເຊື່ອ ໃນທີ່ສຸດພຣະອົງກໍໄດ້ປະທານສິ່ງຕ້ອງການໃຫ້ເຊັ່ນນ້ຳດື່ມແລະອາຫານ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານຈະເອົາອາຫານມາຈາກໃສ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອອະທິບາຍລະຫວ່າງຄຳຕໍ່ວ່າຂອງພວກອິສຣາເອັນແລະສິ່ງທີ່ພຣະເຈົ້າປະທານສິ່ງເຂົາຕ້ອງການໃຫ້ ເພື່ອຈະເອົາບົດຮຽນນີ້ມາປະກອບໃຊ້ເຖິງຄວາມຕ້ອງການຂອງພວກເຮົາໃນທຸກວັນນີ້.

**<u>ເພື່ອຄວາມເຂົ້າໃຈ:</u>** ພຣະເຈົ້າໄດ້ຕອບສນອງຕໍ່ການຈົ່ມຂອງພວກອິສຣາເອັນເພາະພວກເຂົາຂາດອາຫານແລະນ້ຳດື່ມ ພຣະອົງປະທານນ້ຳອອກບໍ່ແລະມານາໃຫ້.

## ບົດນຳ

ປະຊາຊົນໄດ້ຈົ່ມຕໍ່ວ່າກັບໂມເຊແລະພຣະເຈົ້າກໍແປກພຣະທັຍ ແລະອີກປະການນຶ່ງປະວັດນີ້ເຮັດໃຫ້ພວກເຮົາສັງເກດເຫັນນິສັຍໃຈຄໍຂອງເຮົາຕໍ່ພຣະເຈົ້າຢ່າງໃດບໍ່? ວິທີໃດທີ່ຂ້າພະເຈົ້າມັກຈົ່ມຕໍ່ວ່າ? ປະຊາຊົນໄດ້ເຫັນສິ່ງອັສຈັນທີ່ພຣະເຈົ້າໄດ້ກະທຳໃນຖ້າມກາງພວກເຂົາເຊັ່ນ: ພັຍພິບັດໃນເອຢິບ ເສົາໄຟແລະເສົາເມກ; ແຍກນ້ຳທະເລອອກ-ສິ່ງເຫລົ່ານີ້ເປັນສິ່ງແປກປລາດ. ພຣະເຈົ້າຜູ້ກະທຳສິ່ງນີ້ສາມາດຮັກສາປະຊາກອນຂອງພຣະອົງໄດ້ດີ. ເຣື່ອງນີ້ສອນໃຫ້ພວກເຮົາສຳຣວດຕົວເອງໃຫ້ດີ.

ອົບພະຍົບ 16:4, ພຣະເຈົ້າບອກກັບໂມເຊວ່າພຣະອົງຈະທົດສອບປະຊາຊົນ. ຖ້າພວກເຮົາບໍ່ໄດ້ອ່ານຈົນເຖິງສຸດທ້າຍຂອງເຣື່ອງນີ້ພວກເຮົາອາດແປກໃຈວ່າເປັນຫຍັງພຣະເຈົ້າຈຶ່ງບໍ່ໂກດຮ້າຍເພາະການຈົ່ມຕໍ່ວ່າແລະຂາດຄວາມເຊື່ອຂອງປະຊາຊົນ. ແນວໃດກໍດີພຣະເຈົ້າທົດສອບເພື່ອຊ່ອຍພວກເຂົາໃຫ້ເຊື່ອໝັ້ນໃນພຣະອົງ. ພຣະເຈົ້າມີຄວາມຮັກອັນໃຫຍ່ຫລວງແລະອົດກັ້ນໄວ້ນານ. ເຫັນວ່າປະຊາຊົນບໍ່ຜ່ານການທົດສອບນັ້ນໄດ້, ແຕ່ພຣະເຈົ້າຍັງສືບຕໍ່ປະທານສິ່ງຈຳເປັນໃຫ້ພວກເຂົາຕາມຄວາມຕ້ອງການ. ພຣະຄັມພີຕອນນີ້ມີຄວາມໝາຍຫລາຍກວ່າຄຳຈົ່ມຕໍ່ວ່າຂອງປະຊາຊົນ ແລະແມ່ນເຣື່ອງຄວາມຮັກຂອງພຣະເຈົ້າແລະຄວາມຮັກຢ່າງນັ້ນຍັງຕົກມາເຖິງພວກເຮົາໃນທຸກວັນນີ້ເໝືອນກັນ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ກ່າວວ່າ: ໃຫ້ພວກເຮົາອອກຄວາມຄິດເຫັນນຳກັນເຖິງສິ່ງຕ່າງໆທີ່ພໍ່ແມ່ຈະສະແດງຄວາມຮັກຕໍ່ລູກຫລານ. ໃຫ້ຂຽນເປັນລຳດັບໃສ່ກະດານເຊັ່ນ: ໃຊ້ເວລາຢູ່ຮ່ວມກັນ, ເອົາຂອງຂວັນໃຫ້, ເອົາສິ່ງຈຳເປັນໃຫ້, ອູ້ມກອດ, ເອົາພວກເຂົາໄປໂບດນຳ, ສິດສອນ ແລະອື່ນໆ.

2. ຖາມ: ເປັນຫຍັງເດັກນ້ອຍບາງຄົນເຫັນຄຸນທີ່ແມ່ມອບຄວາມຮັກໃຫ້ ແລະອີກບາງຄົນບໍ່ເອົາຫົວຊາ? ເປັນຫຍັງເດັກນ້ອຍບາງຄົນເອົາປຽບບໍ່ເຫັນຄຸນຄ່າທີ່ພໍ່ແມ່ມີຄວາມຮັກແລະເປັນຫ່ວງ? ໃຫ້ສົນທະນາກັນ.

3. ກ່າວວ່າ: ພຣະເຈົ້າມີຄວາມຮັກແລະພຣະອົງປະທານສິ່ງຈຳເປັນໃຫ້ແກ່ປະຊາກອນຂອງພຣະອົງ.

4. ກ່າວວ່າ: ໃນພຣະຄັມພີເດີມ ແລະພຣະຄັມພີໃໝ່ໄດ້ເວົ້າເຖິງສິ່ງທີ່ພຣະເຈົ້າປະທານແກ່ປະຊາກອນຂອງພຣະອົງ. ພຣະອົງຍັງສອນໃຫ້ຕິດຕາມຄຳສອນຂອງພຣະອົງຢ່າງເຄັ່ງຄັດ. ວັນນີ້ພວກເຮົາຈະໄດ້ວັດແທກສິ່ງທີ່ພຣະເຈົ້າປະທານໃຫ້ແລະຄຳສອນຂອງພຣະອົງຕໍ່ພວກອິສຣາເອັນໃນປຶ້ມອົບພະຍົບແລະໃນປຶ້ມໂຢຮັນ.

5. ແບ່ງຫ້ອງຮຽນອອກໄປສາມກຸ່ມສເມີກັນ. ໃຫ້ແຕ່ລະກຸ່ມມີຜູ້ນຳເພື່ອຈົດຄຳຕອບ. ແຕ່ລະກຸ່ມໃຫ້ອ່ານພຣະຄັມພີດັ່ງຕໍ່ລົງໄປນີ້:

   ກຸ່ມ 1: ອົບພະຍົບ 15:22-16:21
   ກຸ່ມ 2: ໂຢຮັນ 6:1-14
   ກຸ່ມ 3: ໂຢຮັນ 6:22-51

ຫລັງຈາກອ່ານແລ້ວໃຫ້ຕອບຄຳຖາມດັ່ງຕໍ່ລົງໄປນີ້:

1. ຕາມຂໍ້ພຣະຄັມພີທີ່ທ່ານອ່ານໄດ້ເວົ້າເຖິງພຣະເຈົ້າຈັດຫາສິ່ງຈຳເປັນໃຫ້ປະຊາກອນຂອງພຣະອົງຢ່າງໃດ?
2. ປະຊາຊົນໄດ້ຕອບສນອງຕໍ່ພຣະເຈົ້າແນວໃດ?
3. ທ່ານຄິດວ່າເປັນຫຍັງພວກເຂົາຈຶ່ງຕອບສນອງຕໍ່ພຣະເຈົ້າຢ່າງນັ້ນ?
4. ແມ່ນຫຍັງຄືບົດຮຽນທີ່ພຣະເຈົ້າຢາກສອນພວກເຂົາແລະບອກພວກເຮົາ?
5. ມີບົດຮຽນອັນໃດທີ່ຜູ້ເປັນພໍ່ແມ່ຄວນນຳເອົາມາສອນຜູ້ເປັນລູກໃນທຸກວັນນີ້?

6. ໃຫ້ເວລາແຕ່ລະກຸ່ມເຮັດບົດຮຽນໃຫ້ແລ້ວ ຫລັງຈາກນັ້ນແລ້ວກໍຂໍໃຫ້ແຕ່ລະກຸ່ມລາຍງານ. ໃຫ້ບອກເຖິງສິ່ງທີ່ພຣະເຈົ້າປະທານໃຫ້.

7. ກ່າວວ່າ: ພວກເຮົາໄດ້ເບິ່ງໃນພຣະຄັມພີເດີມ ແລະພຣະຄັມພີໃໝ່ເຖິງການຈັດຫາຂອງພຣະເຈົ້າຕໍ່ປະຊາກອນຂອງພຣະອົງ. ໃຫ້ບອກເຖິງໃນຍາມຍາກລໍາບາກພຣະເຈົ້າໄດ້ຊ່ອຍທ່ານ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 7
## ສ່ຽງພັຍໃນການເຂົ້າພົບກັບພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 19:1-12, 16-22

**ພູມຫລັງຂອງພຣະຄັມພີ:** ອົບພະຍົບ 19

**ຈຸດສຳຄັນຂອງບົດຮຽນນີ້:** ເຂົ້າໄປໃນການເອີ້ນຈາກພຣະເຈົ້າເປັນການຕຽມຕົວຖວາຍຊີວິດໃນການຮັກສາພຣະສັນຍາຂອງພຣະເຈົ້າ.

**ຄຳຖາມເພື່ອການຄົ້ນຄວ້າ:** ຄຳເວົ້າອັນໃດອະທິບາຍເຖິງເຣື່ອງພຣະເຈົ້າ ແລະຄຳເວົ້ານັ້ນໄດ້ຖືກຕ້ອງກັບພຣະຄັມຕອນນີ້ຫລືບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອອະທິບາຍເຖິງຄວາມສັມພັນຂອງຂ້າພະເຈົ້າຕໍ່ພຣະເຈົ້າອີງຕາມພຣະຄັມພີຕອນນີ້ ແລະເພື່ອຕອບຄຳເອີ້ນຈາກພຣະອົງໃຫ້ເຂົ້າໄປໃນພຣະສັນຍາກັບພຣະອົງ

**ເພື່ອຄວາມເຂົ້າໃຈ:** ພວກອິສຣາເອັນໄດ້ໄປເຖິງພູເຂົາຊີນາຍເພື່ອຕຽມເຂົ້າພົບກັບພຣະອົງເພື່ອສ້າງຕັ້ງຄຳສັນຍາຂອງພວກເຂົາຕໍ່ພຣະອົງ.

### ບົດນຳ

ພຣະເຈົ້າແມ່ນໃຜສຳລັບທ່ານ? ພຣະເຈົ້າແມ່ນໃຜຕໍ່ກຸ່ມສຶກສາພຣະຄັມພີໃນຫ້ອງຮຽນຂອງທ່ານ? ມີຫລາຍຄົນຢາກເຂົ້າສນິດໃກ້ຊິດກັບພຣະເຈົ້າ ແລະພວກເຂົາເລືອກເອົາວິທີການເຂົ້າຫາພຣະອົງຕາມຄວາມນຶກຄຶດຂອງຕົນເອງ. ມີຫລາຍຄົນຈັດລາຍການນະມັສການໃຫ້ຖືກໃຈຄົນທີ່ບໍ່ເຄີຍໄປໂບດ ແຕ່ອີກຢ່າງນຶ່ງການນະມັສການບໍ່ຄວນເປັນສິ່ງຊ້ຳຊາກຈົນເກີນໄປຈົນກາຍເປັນທຳນຽມຢ່າງໂອໂຕມາຕິກ. ມັນເປັນການອາຍຖ້າຜູ້ນຳລາຍການເຮັດໃຫ້ຄົນມານະມັສການເບື່ອຫລືເຫງົານອນ. ຢ່າລືມເຮັດຕາມເດີມບໍ່ແມ່ນການເຮັດຕາມອາດ ຫລືເຮັດຕາມເດີມບໍ່ແມ່ນເຮັດເພື່ອຄວາມສະດວກສະບາຍ.

ອົບພະຍົບ 19 ໂມເຊໄດ້ປະຕິບັດຄົບວົງຈອນ ທຳອິດລາວໄດ້ພົບກັບພຣະເຈົ້າທີ່ພູເຂົາຊີນາຍຄືພຸ່ມໄມ້ມີໄຟ (ອພຍ 3). ບັດນີ້ລາວໄດ້ນຳພາປະຊາຊົນໄປພົບກັບພຣະເຈົ້າ ພວກເຂົາເຄີຍເຫັນສິ່ງທີ່ພຣະເຈົ້າກະທຳມາກ່ອນແລ້ວ. ພວກເຂົາຍັງໄດ້ເປັນພະຍານເຖິງຣິດອຳນາດຂອງພຣະອົງຕໍ່ຄົນອື່ນໆ. ບັດນີ້ພວກເຂົາຈະໄດ້ພົບກັບພຣະເຈົ້າດ້ວຍຄວາມຢຳເກງແລະຢ້ານກົວ.

ເປັນພຣະພອນທີ່ໄດ້ເຂົ້າຮ່ວມກັບພຣະສັນຍາກັບພຣະເຈົ້າ ແລະຍັງເປັນຄຳສັ່ງອັນຍິ່ງໃຫຍ່ອີກ ຄຳຖາມມີຢູ່ວ່າພວກເຮົາຈະຕອບສນອງຕໍ່ຄຳເອີ້ນຂອງພຣະເຈົ້າຢ່າງໃດ ບໍ່ແມ່ນດ້ວຍຄຳເວົ້າເທົ່ານັ້ນແຕ່ຕ້ອງປະກອບດ້ວຍພາກປະຕິບັດນຳ, ເປັນພະຍານເພື່ອພຣະສັນຍານັ້ນເປັນຄວາມຈິງແທ້ໃນຊີວິດຂອງພວກເຮົາ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

8. ເອົາຫີບມາປະກອບ (ເອົາເຄື່ອງນຸ່ງຂອງໃຊ້ໃສ່ໃນຫີບເພື່ອຈະອອກເດີນທາງ). ບອກໃຫ້ສະມາຊິກໃນຫ້ອງບອກເຖິງບ່ອນຕ່າງໆທີ່ພວກເຮົາຢາກໄປພັກຜ່ອນ. ຖາມວ່າຖ້າທ່ານຈະໄປທ່ຽວເມືອງລາວທ່ານຈະເອົາຫຍັງໄປນຳແດ່? ຕໍ່ມາໃຫ້ທ່ານເອົາຂອງທີ່ທ່ານໃສ່ໃນຫີບນັ້ນອອກມາແຕ່ລະຢ່າງ. ຖາມວ່າສິ່ງນັ້ນເປັນປະໂຫຍດບໍ່ຫລືບໍ່ເປັນປະໂຫຍດໃນການເດີນທາງ.

9. ກ່າວວ່າ: ພວກເຮົາບໍ່ອາດພຽງແຕ່ຝັນຢາກໄປທ່ຽວບ່ອນນັ້ນບ່ອນນີ້ໂດຍບໍ່ຕ້ອງຈັດຕຽມເອົາສິ່ງຈຳເປັນໄປນຳ. ບົດຮຽນວັນນີ້ສອນພວກເຮົາໃຫ້ຈັດຕາມເພື່ອເຂົ້າເຝົ້າພຣະເຈົ້າ.

10. ຂໍໃຫ້ຄົນນຶ່ງອ່ານບົດຮຽນອາທິດແລ້ວເພື່ອຄວາມຊົງຈຳຈາກ ອົບພະຍົບ 19:1-2. ບອກວ່າພວກອິສຣາເອັນກຳລັງຕັ້ງຄ້າຍທີ່ພູເຂົາຊີນາຍ.

11. ຂໍໃຫ້ມີຜູ້ສມັກອ່ານ ອົບພະຍົບ 19:3-6. ຖາມວ່າ: ທ່ານຄິດວ່າແມ່ນຫຍັງທີ່ພຣະເຈົ້າຫວັງວ່າພວກອິສຣາເອັນໄດ້ຮຽນໃນລະຍະສອງເດືອນໃນການເດີນທາງຄັ້ງນີ້? ໃນພຣະຄັມພີໃໝ່ 1 ເປໂຕ 2:9-10 ເປັນຄວາມຫວັງວ່າຜູ້ຕິດຕາມອົງພຣະເຢຊູຈະໄດ້ເຮັດຢ່າງນັ້ນເໝືອນກັນ.

12. ເຊີນໃຫ້ຄົນອ່ານ ອົບພະຍົບ 19:7-8. ຖາມວ່າ ຖ້າສິດຍາພິບານມາຫາພວກເຮົາວັນນີ້ແລະບອກວ່າພຣະເຈົ້າໄດ້ອອກດຳຣັດ, ອ່ານອົບພະຍົບ 9:5-6, ທ່ານຄິດວ່າຄຣິສຕະຈັກຂອງເຮົາຈະເຮັດແນວໃດ?

13. ໃຫ້ຄົນນຶ່ງອ່ານ ອົບພະຍົບ 19:9-12. ກ່າວວ່າ: ພຣະເຈົ້າບອກໃຫ້ໂມເຊເຕືອນປະຊາຊົນວ່າພວກເຂົາມີເວລາສາມວັນເພື່ອຈັດຕຽມເພື່ອເຂົ້າເຝົ້າພຣະເຈົ້າ. ພຣະເຈົ້າໄດ້ສັ່ງສະເພາະແລະມີຂອບເຂດ. ໃຫ້ພວກເຮົາພາກັນຊຽນເປັນລຳດັບເຖິງຄຳສັ່ງນັ້ນ. ບອກວ່າພຣະເຈົ້າຜູ້ຊົງຕັດສັ່ງກັບພວກອິສຣາເອັນຫລາຍພັນປີມາແລ້ວ ພຣະອົງຍັງຢາກສ້າງຄວາມສັມພັນກັບພວກເຮົາໃນທຸກວັນນີ້. ໃຫ້ພາກັນສົນທະນາກັນເຖິງເຣື່ອງນີ້.

14. ກ່າວວ່າ: ຂໍ້ພຣະຄັມພີຕໍ່ໄປນີ້ໄດ້ບອກຖືງການດົນບັນດານຂອງພຣະເຈົ້າທີ່ໄດ້ເປີດເຜີຍໃນພຣະຄັມພີເດີມ. ໃຫ້ຄົນນຶ່ງອ່ານ ອົບພະຍົບ 19:16-22. ຖາມວ່າ: ມີພາບອັນໃດເຂົ້າມາໃນສມອງແລະຈິດໃຈຂອງທ່ານເມື່ອທ່ານໄດ້ຍິນພຣະຄັມພີຂໍ້ນີ້?

15. ກ່າວວ່າ: ສົມມຸດວ່າທ່ານກຳລັງຈະເຂົ້າໄປໃນການນະມັສການດຽວນີ້ ທ່ານຄຶດວ່າບົດຮຽນວັນນີ້ໄດ້ຊ່ອຍທ່ານໃຫ້ຕຽມຕົວເຂົ້າເຝົ້າພຣະເຈົ້າແນວໃດ?

16. ອ້ອນວອນປິດ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 8</u>

## ພື້ນຖານການປະພຶດຂອງປະຊາກອນພັນທະສັນຍາ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>:** ອົບພະຍົບ 20: 1-17

**<u>ພູມຫລັງຂອງພຣະຄັມພີ</u>:** ອົບພະຍົບ 20: 1-21

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຈົ້າປະທານຄຳສອນສຳລັບການປະພຶດຂອງບຸກຄົນທີ່ຢູ່ໃນພັນທະສັນຍາກ່ຽວກັບຄວາມສຳພັນກັບພຣະອົງ ແລະລະຫວ່າງກັນແລະກັນ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>:** ພຣະເຈົ້າຊົງປະສົງໃຫ້ພວກເຮົາດຳເນີນຊີວິດວິທີໃດ?

**<u>ຈຸດປະສົງຂອງການສຶກສານີ້</u>:** ເພື່ອສລຸບພຣະບັນຍັດສິບປະການ ແລະເວົ້າເຖິງຄວາມໝາຍສຳລັບຊີວິດຂອງຂ້ອຍ.

### <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຊັກຊວນໃຫ້ນັກຮຽນບາງຄົນແບ່ງປັນກ່ຽວກັບລະບຽບໃນຄອບຄົວຂອງຕົນ ຕອນຍັງເຍົາວັຍ(ໄປທ່ຽວກາງຄືນຕ້ອງກັບບ້ານກ່ອນສິບໂມງ, ບໍ່ໃຫ້ຖິ້ມເຄື່ອງນຸ່ງເປື້ອນໄວ້ພື້ນເຮືອນ, ຕໍ່ໆໄປ)
2. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊວນສົນທະນາ:
   - ລະບຽບໃດແດ່ທີ່ຍາກສຳລັບທ່ານ?
   - ລະບຽບໃດແດ່ທີ່ເຫັນວ່າບໍ່ຍຸດຕິທັມ?
   - ມີຜົນຮ້າຍແນວໃດແດ່ຖ້າບໍ່ເຮັດຕາມລະບຽບ?
   - ມີລະບຽບຄອບຄົວແນວໃດທີ່ທ່ານໄດ້ນຳມາໃຊ້?

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ແນະນຳວ່າມື້ນີ້ພວກເຮົາຈະໄດ້ເຫັນລະບຽບ ຫລືບັນຍັດທີ່ພຣະເຈົ້າໄດ້ຈັດຕຽມໄວ້ເພື່ອໄພ່ພົນຂອງພຣະອົງ. ພານັກຮຽນເບິ່ງຫົວຂໍ້ໃຫຍ່ ຂອງບົດຮຽນ (ທີ່ທ່ານໄດ້ຂຽນໄວ້ລ່ວງໜ້າແລ້ວ)
4. ໃຫ້ຜູ້ນຶ່ງອ່ານ ອົບພະຍົບ 20:1-2. ແລ້ວຖາມວ່າ: <u>ຜູ້ໃດໃຫ້ສິດພຣະເຈົ້າໃນການວາງລະບຽບນີ້?</u> ຫລັງຈາກມີການຕອບແລ້ວໃຊ້ເວລາເລົ່າເຣື່ອງຊົນຊາດອິສຣາເອັນໃນເອຢິບແລະການອົບພະຍົບ; ເວົ້າເຣື່ອງແບບສັ້ນ. ຖາມ: <u>ຖ້າພຣະເຈົ້າຊົງເຮັດທຸກຢ່າງເພື່ອພວກເຂົາ, ເປັນຫຍັງຫລາຍຄົນບໍ່ຢາກປະຕິບັດຕາມພຣະບັນຍັດ?</u>

5. ແນະນຳວ່າພຣະເຈົ້າຊົງໃຫ້ພຣະບັນຍັດເພື່ອອິສຣາເອັນຈະໄດ້ສ້າງຊຸມຊົນໃໝ່ທີ່ແຕກຕ່າງກັບສິ່ງທີ່ພວກເຂົາເຈົ້າໄດ້ຮຽນຮູ້ທີ່ປະເທດເອຢິບ.
6. ໃຫ້ຜູ້ນຶ່ງອ່ານ ອພຍ 20:3-7. ແນະນຳວ່າພຣະທັມຕອນນີ້ເວົ້າເຖິງບັນຍັດສາມຂໍ້ທຳອິດທີ່ກ່ຽວກັບຄວາມສັມພັນລະຫວ່າງພວກເຂົາກັບພຣະເຈົ້າ. ໃຊ້ຄຳຖາມຕໍ່ໄປນີ້ເພື່ອສົນທະນາ:
   - ແມ່ນຫຍັງຄືເບື້ອງຫລັງທີ່ເຮັດໃຫ້ພຣະເຈົ້າສັ່ງວ່າ "ຢ່ານະມັສການພຣະອື່ນ ນອກຈາກເຮົາ"?
   - ມາເຖິງຕອນນີ້ໄພ່ພົນຂອງພຣະເຈົ້າປະຕິບັດພຣະບັນຍັດໄດ້ດີຂນາດໃດ?
   - ເປັນຫຍັງພຣະເຈົ້າສັ່ງບໍ່ໃຫ້ເຮັດຮູບໂຄຣົບ, ໂດຍສະເພາະຮູບຂອງພຣະອົງ?
   - ຄຳວ່າ "ພຣະເຈົ້າທີ່ຫວງແຫນ" ມີຄວາມໝາຍແນວໃດ?
   - ແມ່ນຫຍັງຄືຜົນທີ່ຕາມມາຂອງການໄຫວ້ພຣະອື່ນໆ?
   - ການໃຊ້ພຣະນາມພຣະເຈົ້າໃນທາງຊົ່ວແປວ່າຫຍັງ?
7. ໃຫ້ຜູ້ນຶ່ງອ່ານ ອພຍ 20:8-11. ອະທິບາຍເຣື່ອງການຖືວັນຊະບາໂຕ ໂດຍໃຊ້ບົດຮຽນຊ່ວຍ.
8. ແນະນຳວ່າຫົກບັນຍັດຕໍ່ໄປແມ່ນເນັ້ນໃສ່ຄວາມສັມພັນກັບຄົນອື່ນໆ. ໃຫ້ຜູ້ນຶ່ງອ່ານ 20:12-17. ໃຊ້ຄຳຖາມຕໍ່ໄປນີ້ເພື່ອສົນທະນາ:
   - ການນັບຖືພໍ່ແມ່ມີຄວາມໝາຍແນວໃດ?
   - ການຂ້າຄົນມີຜົນຮ້າຍແນວໃດແດ່?
   - ການຫລິ້ນຊູ້ສາມາດທຳລາຍຊຸມຊົນຂອງພຣະເຈົ້າແນວໃດແດ່?
   - ເປັນຫຍັງພຣະເຈົ້າຈຶ່ງຫ້າມບໍ່ໃຫ້ລັກ?
   - ແມ່ນຫຍັງຄືຜົນຮ້າຍຈາກການເປັນພະຍານບໍ່ຈິງ?
   - ການຢາກໄດ້ຂອງຄົນອື່ນເລີ້ມຈາກໃສ?

## ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

9. ຖາມເພື່ອໃຫ້ຄິດ:
   - ເມື່ອເບິ່ງພຣະບັນຍັດຂອງພຣະເຈົ້າແລ້ວ ພວກເຮົາຈະດຳເນີນຊີວິດຢ່າງໃດ?
   - ມີພຽງແຕ່ບັນຍັດສິບປະການເທົ່ານັ້ນບໍ ທີ່ພຣະເຈົ້າຊົງປະສົງໃຫ້ພວກເຮົາຖືຮັກສາ? ເບິ່ງ ລູກາ 18: 21-22.
   - ມີບັນຍັດຂໍ້ໃດທີ່ເວົ້າກັບທ່ານຫລາຍທີ່ສຸດໃນການສຶກສາພຣະທັມຕອນນີ້? ຖ້າມີ, ທ່ານຈະແກ້ໄຂແນວໃດ?
10. ປິດການຮຽນດ້ວຍການອ້ອນວອນ, ຂອບພຣະຄຸນພຣະເຈົ້າທີ່ໃຫ້ແນວທາງຢ່າງແຈ້ງຂາວສຳລັບຊີວິດໃນຖານະປະຊາກອນຂອງພຣະເຈົ້າ; ອ້ອນວອນໃຫ້ທຸກຄົນດຳເນີນຊີວິດເພື່ອໃຫ້ພຣະອົງຊົງພໍພຣະທັຍ ແລະໃຫ້ກຽດຄົນອື່ນໆ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 9

## ລາຍລະອຽດຂອງການດຳເນີນຊີວິດໃນພັນທະສັນຍາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ອົບພະຍົບ 21: 1-2, 7-17, 22-27; 22:21---23:12

**ພູມຫລັງຂອງພຣະຄັມພີ**: ອົບພະຍົບ 20: 22---23:19

**ຈຸດສຳຄັນສຳລັບບົດຮຽນນີ້**: ໃນຖານະຜູ້ຢູ່ໃນພັນທະສັນຍາຂອງພຣະເຈົ້າ ພວກເຂົາເຈົ້າຈະຕ້ອງດຳເນີນຊີວິດຢ່າງສັດຊື່ຕາມລາຍລະອຽດທີ່ໄດ້ຊົງປະທານໃຫ້.

**ຄຳຖາມເພື່ອຄົ້ນຄວ້າ**: ການດຳເນີນຊີວິດຂອງທ່ານແຕ່ລະວັນບອກເຖິງຄວາມເຊື່ອໃນພຣະເຈົ້າວິທີໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອສລຸບຄຳສັ່ງສອນກ່ຽວກັບກົດໃນພັນທະສັນຍາ ແລະວິຈັຍເບິ່ງວ່າສິ່ງໃດແດ່ທີ່ເວົ້າກັບພວກເຮົາໃນສມັຍນີ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ນຳເອົາໃບໂຄສະນາຫລອກລວງຕ່າງໆ ທີ່ມີລາຍລະອຽດຊຽນເປັນໜັງສືນ້ອຍໆເພື່ອບໍ່ໃຫ້ຄົນເຫັນຄວາມຈິງ (ຊື້ຣົດບໍ່ຕ້ອງໃຊ້ເງິນດາວ, ໄປພັກໂຮງແຮມຟຣີ, ບໍ່ເສັຽຄ່າເຄື່ອງບິນຖ້າໄປຟັງຄຳໂຄສະນາ, ຫລິ້ນເກມໂດຍບໍ່ຕ້ອງຊື້ຫຍັງ ແຕ່ມີລາງວັນໃຫຍ່, ແລະຕໍ່ໆໄປ)
2. ຖ້າພວກເຮົາສັງເກດໃຫ້ດີຈະເຫັນວ່າ ຕົວໜັງສືນ້ອຍໆນັ້ນແມ່ນລາຍລະອຽດສຳລັບຊີວິດ. ໜັງສືນ້ອຍໆຈະບອກວ່າ ຜູ້ໃດ, ແມ່ນຫຍັງ, ເວລາໃດ, ແລະວິທີໃດຊຶ່ງເປັນສິ່ງສຳຄັນ. ຊັກຊວນໃຫ້ຜູ້ເຄີຍຖືກຫລອກມາແບ່ງປັນປະສົບການ ເພາະບໍ່ໄດ້ອ່ານຕົວໜັງສືນ້ອຍໆໃນໃບໂຄສະນາ
3. ແນະນຳບົດຮຽນ ແລະບອກວ່າໃນມື້ນີ້ພວກເຂົາເຈົ້າຈະໄດ້ສລຸບກົດບັນຍັດ ຊຶ່ງເປັນຕົວໜັງສືນ້ອຍຂອງພຣະເຈົ້າ, ແລະຈະພິສູດວ່າກົດຂໍ້ໃດທີ່ກຳລັງເວົ້າພວກເຂົາເຈົ້າໃນປັດຈຸບັນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

4. ເວົ້າວ່າ ກົດບັນຍັດ ແລະການປະຕິບັດໃນພຣະສັນຍາເດີມເປັນເຣື່ອງທີ່ເຂົ້າໃຈຍາກ ຫລືຍອມຮັບໄດ້ຍາກ. ເພາະພວກເຮົາຈະຕ້ອງເຂົ້າໃຈເນື້ອຫາແລະປະເພນີໃນຕອນທີ່ພຣະຄຳນັ້ນໄດ້ຖືກຂຽນ. ຊັກຊວນໃຫ້ນັກຮຽນເບິ່ງຄຳແນະນຳໃນ "**ຄວາມໝາຍແລະການປະຕິບັດ**" ຂອງບົດຮຽນນີ້.
5. ໃຊ້ຫົວຂໍ້ໃຫຍ່ຂອງບົດຮຽນເພື່ອນຳພາການສຶກສາພຣະຄຳ. ພານັກຮຽນເບິ່ງອົບພະຍົບ 21:1-2, 7-11. ຫລັງຈາກອ່ານແລ້ວໃຫ້ເບິ່ງຫົວຂໍ້ "ການເປັນທາດສຳລັບຜູ້ເຄີຍເປັນທາດ," ແລ້ວຖາມວ່າ:
    - ພຣະຄັມພີສອນເຣື່ອງຂ້າທາດແນວໃດໃນພຣະຄຳຕອນນີ້?
    - ຂ້າທາດມີສ່ວນໃນເຣື່ອງເສຖກິດຂອງຊົນຊາດອິສຣາເອັນຢ່າງໃດ?

- ແມ່ນຫຍັງຄືເປົ້າໝາຍຂອງຄຳສອນໃນຕອນນີ້?
- ກົດບັນຍັດເຣື່ອງຂ້າທາດເວົ້າແນວໃດແດ່ກ່ຽວກັບຜູ້ຍິງ?
- ກົດບັນຍັດເຫລົ່ານີ້ຈະຊ່ວຍ ຫລືຈະທຳລາຍສັງຄົມຂອງພວກເຮົາຢ່າງໃດ?
- ພວກເຮົາຈະສາມາດໃຊ້ຄຳສອນນີ້ກັບສັງຄົມຂອງພວກເຮົາໃນປັດຈຸບັນໄດ້ຢ່າງໃດ?

6. ເບິ່ງກົດບັນຍັດທີ່ໃຫ້ຄຳແນະນຳສຳລັບໄພ່ພົນຂອງພຣະເຈົ້າ ເພື່ອຈະສະແດງຄຸນສົມບັດຂອງພຣະເຈົ້າ. ອ່ານ ອົບພະຍົບ 21:12-27 ແລ້ວອະທິບາຍກົດເຣື່ອງການລົງໂທດ. ທ່ານອາດຈະເບິ່ງ ລະບຽບເລວີ 24:17-22 ເພື່ອຊ່ວຍ. ຢ່າລືມເນັ້ນຈຸດປະສົງຂອງການລົງໂທດ.
7. ອ່ານ ມັດທາຍ 5:38-48. ຖາມ: ພຣະຄຳຂອງພຣະເຢຊູຊ່ວຍພວກເຮົາໃຫ້ເຂົ້າໃຈກົດບັນຍັດເຣື່ອງການລົງໂທດຢ່າງໃດ?
8. ພານັກຮຽນເບິ່ງຫົວຂໍ້ໃຫຍ່ "ຄວາມຍຸດຕິທັມແລະຄວາມເມດຕາສຳລັບຜູ້ເສັຽຫາຍ" (ອພຍ 22:21—23:12). ໃຊ້ຄຳຖາມຕໍ່ໄປນີ້ເພື່ອສົນທະນາ:
   - ພຣະຄຳເວົ້າຢ່າງໃດກ່ຽວກັບການທຳຮ້າຍຍິງໝ້າຍ ແລະເດັກກຳພ້າ?
   - ທ່ານຄິດວ່າພຣະເຈົ້າຊົງມີຄວາມຮັກພິເສດສຳລັບພວກຍິງໝ້າຍແລະເດັກກຳພ້າບໍ່?
   - ຊົນຊາດອິສຣາເອັນຈະຕ້ອງເຮັດແນວໃດກັບຄົນຕ່າງດ້າວ? ພວກເຮົາໃນສມັຍນີ້ມີບັນຫາເຣື່ອງນີ້ບໍ່?
   - ພຣະເຢຊູຊົງບອກວ່າຄົນຍາກຈົນຈະມີຢູ່ຕລອດໄປ, ແລະໃນທີ່ນີ້ພຣະເຈົ້າໄດ້ຊົງວາງກົດໄວ້ເພື່ອປົກປ້ອງພວກເຂົາ. ຄວາມຍາກຈົນບອກໃຫ້ຮູ້ແນວໃດກ່ຽວກັບຈິດວິນຍານຂອງໄພ່ພົນຂອງພຣະເຈົ້າ? ພວກເຮົາຕ້ອງມີທັສນະແນວໃດກັບຄົນຍາກຈົນ? ມີວິທີໃດບໍ່ທີ່ພວກເຮົາສາມາດຈະຊ່ວຍຄົນຍາກຈົນ?
   - ພຣະເຈົ້າຊົງຫ່ວງໃຍໄຮ່ນາແລະພວກສັດຢ່າງໃດ?
   - ທ່ານຮູ້ສຶກຢ່າງໃດກັບທຸກສິ່ງທີ່ພຣະເຈົ້າໄດ້ຊົງສ້າງໄວ້?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ໃຫ້ຜູ້ນຶ່ງອ່ານຄຳຖາມໃນພາກສຸດທ້າຍຂອງບົດຮຽນຂໍ້ 2-6. ແລ້ວຖາມວ່າ:
   - ພວກເຮົາມີສິດທິແນວໃດແດ່ໃນຖານະເປັນໄພ່ພົນຂອງພຣະເຈົ້າ?
   - ພວກເຮົາໄດ້ສະລະສິດແນວໄດແດ່ໃນຖານະເປັນໄພ່ພົນຂອງພຣະເຈົ້າ?
   - ຫລາຍປະເທດໃນໂລກໄດ້ເບິ່ງຂ້າມຄຸນຄ່າຊີວິດມະນຸດວິທີໃດແດ່? (ຄ້າມະນຸດ, ໃຊ້ແຮງງານຟຣີ, ຂ້າທາດທາງເພດ, ຄວາມບໍ່ຍຸດຕິທັມ, ຕໍ່ໆໄປ)
   - ໃນຖານະທີ່ເປັນໄພ່ພົນຂອງພຣະເຈົ້າ, ພວກເຮົາຈະໃຫ້ຄວາມຍຸດຕິທັມກັບຄົນທີ່ຕ້ອຍຕ່ຳໃນສັງຄົມຂອງພວກເຮົາໄດ້ຢ່າງໃດ?

10. ເຕືອນນັກຮຽນວ່າຄຣິສຕຽນເປັນເກືອແລະແສງສວ່າງໃນໂລກທີ່ຂາດຣົດເຄັມແລະຢູ່ໃນຄວາມມືດ.

*ສຄ*

## ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 10</u>

## ຈົ່ງສແວງຫາພຣະເຈົ້າ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ອົບພະຍົບ 24

**<u>ພູມຫລັງຂອງພຣະຄັມພີ</u>**: ອົບພະຍົບ 24

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຫລັງຈາກໄດ້ນຳຊາວອິສຣາເອັນເຮັດພິທີຮັບພັນທະສັນຍາແລ້ວ, ໂມເຊ ແລະຜູ້ນຳໄດ້ເຫັນອົງພຣະຜູ້ເປັນເຈົ້າ.

**<u>ຄຳຖາມເພື່ອຄົ້ນຄ້ວາ</u>**: ການສແວງຫາພຣະເຈົ້າມີຄວາມໝາຍຢ່າງໃດສຳລັບທ່ານ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອອະທິບາຍປະສົບການຂອງໂມເຊ, ພວກຜູ້ນຳ, ແລະປະຊາຊົນ; ແລະທົບທວນເບິ່ງປະສົບການທີ່ໄດ້ນຳຂ້ອຍເອງມາເຖິງຄວາມເຊື່ອໃນພຣະເຈົ້າ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ເຊີນນັກຮຽນໃຫ້ອອກຄວາມເຫັນກ່ຽວກັບປໂຍກທີ່ມີຄຳວ່າ “ເຫັນ” (ເຫັນໜ້າເທື່ອດຽວຫລົງຮັກ, ເຫັນແລ້ວຈຶ່ງເຊື່ອ, ຄວາມສຸກເປັນຂອງຜູ້ທີ່ບໍ່ເຫັນ, ຄວາມສຸກເປັນຂອງຜູ້ທີ່ມີໃຈບໍຣິສຸດ ເພາະເຂົາຈະໄດ້ເຫັນພຣະເຈົ້າ, ຕໍ່ໆໄປ). ພານັກຮຽນເບິ່ງແຜນທີ່ໃນສມັຍພຣະສັນຍາເດີມ (ໃຫ້ທ່ານຕຽມແຜນທີ່ໄວ້ລ່ວງໜ້າ). ໃຫ້ນັກຮຽນຊອກຫາພູເຂົາຊີນາຍທີ່ໂມເຊໄດ້ຂຶ້ນໄປພົບພຣະເຈົ້າ.
2. ອະທິບາຍເຣື່ອງໂມເຊໄດ້ນຳພາຊົນຊາດອິສຣາເອັນເຮັດພິທີຮັບພັນທະສັນຍາ; ໂມເຊແລະພວກຜູ້ນຳຂອງອິສຣາເອັນໄດ້ເຫັນພຣະເຈົ້າ; ແນະນຳວ່າບົດຮຽນມື້ນີ້ຈະຊ່ວຍພວກເຮົາໃຫ້ເຂົ້າໃຈວ່າ “ການເຫັນພຣະເຈົ້າມີຄວາມໝາຍແນວໃດສຳລັບພວກເຮົາ?”

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ເບິ່ງຫົວຂໍ້ໃຫຍ່ຂອງບົດຮຽນ (ທີ່ທ່ານໄດ້ຂຽນໄວ້ກ່ອນແລ້ວເທິງກະດານ)
   1) ການສະຖາປະນາກິດບັນຍັດ (ອພຍ 24:1-8)
   2) ພົບພຣະເຈົ້າເປັນທາງສ່ວນຕົວ (ອພຍ 24:9-11)
   3) ໂມເຊໄດ້ຮັບແຜ່ນຫີນ (ອພຍ 24:12-18)
4. ໃຫ້ຜູ້ນຶ່ງອ່ານ ອົບພະຍົບ 24:1-8, ແລ້ວຖາມວ່າ:
   - ໃຜເປັນຜູ້ເລີ້ມຕົ້ນເພື່ອໃຫ້ໂມເຊແລະພວກຜູ້ນຳໄດ້ເຫັນພຣະເຈົ້າ? (ພຣະເຈົ້າ). ເປັນຫຍັງຈຶ່ງເປັນເຣື່ອງສຳຄັນ?
   - ພຣະເຈົ້າໄດ້ຊົງສັ່ງພວກຜູ້ນຳແນວໃດ ນອກຈາກໂມເຊ?

- ປະຊາຊົນຕອບຮັບຢ່າງໃດເວລາໂມເຊໄດ້ແບ່ງປັນພຣະຄໍາຂອງພຣະເຈົ້າ?
- ຊົນຊາດອິສຣາເອັນສັດຊື່ຕໍ່ຄໍາສັນຍາຈົນເຖິງທີ່ສຸດບໍ່?
- ແທ່ນບູຊາ ແລະຫີນສິບສອງກ້ອນມີຄວາມໝາຍຢ່າງໃດ?
- ເລືອດໃນຊາມ ແລະທີ່ແທ່ນບູຊາມີຄວາມໝາຍຢ່າງໃດ? (24:5-8)
- ພຣະຄໍາຕອນນີ້ບອກຫຍັງແດ່ກ່ຽວກັບຊົດຊາດອິສຣາເອັນແລະກົດບັນຍັດ?

5. ອະທິບາຍວ່າເຫດການໃນ 24:1-8 ແມ່ນຈັດຕຽມໂມເຊເພື່ອຈະໄປພົບພຣະເຈົ້າໂດຍທາງສ່ວນຕົວ. ອ່ານ 24:9-11 ເໝືອນກັບວ່າແມ່ນຕົວທ່ານເອງເປັນຜູ້ລາຍງານ; ແລ້ວຖາມ:
    - ມີໃຜແດ່ທີ່ໄດ້ຂຶ້ນໄປເທິງພູ? ມີຈັກຄົນທີ່ໄດ້ເຫັນພຣະເຈົ້າ?
    - ພວກເຂົາເຈົ້າໄດ້ເຫັນພຣະເຈົ້າຢ່າງແຈ້ງຂາວບໍ່ ຫລືວ່າພວກເຂົາເຈົ້າໄດ້ເຫັນພຽງຕົວແທນຂອງພຣະເຈົ້າ?
    - ມີຂອບເຂດແນວໃດແດ່ເວລາພວກເຮົາຈະບັລຍາຍຮູບຮ່າງຂອງພຣະເຈົ້າ?
    - ຄວາມເລິກລັບໃນການປາກົດຕົວຂອງພຣະເຈົ້າເປັນກໍາລັງໃຈໃຫ້ທ່ານ ຫລືສ້າງຄວາມສົງສັຍຫລາຍຂຶ້ນ?
6. ຫລັງຈາກສົນທະນາແລ້ວ, ພານັກຮຽນເບິ່ງຫົວຂໍ້ “ໂມເຊໄດ້ຮັບແຜ່ນຫີນ (ອພຍ 24:12-18).” ອະທິບາຍພຣະຄໍາໂດຍໃຊ້ບົດຮຽນ. ເນັ້ນເຣື່ອງແຜ່ນຫີນ, ເຣື່ອງໂຢຊວຍ, ເຣື່ອງໂມເຊສັ່ງໃຫ້ຄົນອື່ນລໍຖ້າ, ເມກຂອງພຣະເຈົ້າ, ສະງ່າຣາສີຂອງພຣະເຈົ້າ, ຕໍ່ໆໄປ.
7. ຊີ້ໃຫ້ທຸກຄົນເຫັນວ່າໂມເຊໄດ້ໄປຢູ່ກັບພຣະເຈົ້າສີ່ສິບວັນແລະສີ່ສິບຄືນ; ອາໂຣນດູແລປະຊາຊົນ, ພວກເຂົາອິດເມື່ອຍໃນການລໍຄອຍ, ການສ້າງງົວຄໍາເພື່ອນະມັສການ (ອພຍ 32, ບົດຮຽນ 12). ຖາມ: ເປັນຫຍັງຄົນມັກໄປຊອກຫາພຣະເຈົ້າຢູ່ຜິດບ່ອນ ຫລື ເປັນຫຍັງຄົນມັກສ້າງພຣະເຈົ້າເພື່ອພວກເຂົາຈະເບິ່ງເຫັນ?

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ພານັກຮຽນຕອບຄໍາຖາມ 4 ແລະ 5 ໃນພາກສຸດທ້າຍຂອງບົດຮຽນ. ໃຊ້ເວລາຕາມເຫັນສົມຄວນ.
9. ຖາມນັກຮຽນ: ທ່ານຈະເຮັດແນວໃດໃນອາທິດນີ້ ເພື່ອຈະໄດ້ເຫັນພຣະເຈົ້າດີຂຶ້ນ?
10. ອ້ອນວອນປິດ; ຂອບຄຸນພຣະເຈົ້າສໍາລັບການຊົງຢູ່ດ້ວຍ ແລະການຊົງເປີດເຜີຍພຣະອົງເອງໃນມື້ນີ້.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນ 11
# ຂອງໃນໂລກເພື່ອປະກາດເຣື່ອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 25:1-32; 32:1-8; 27:1-2; 29:43-46
**ພູມຫລັງຂອງພຣະຄັມພີ:** ອົບພະຍົບ 25--30
**ຈຸດສຳຄັນຂອງບົດຮຽນນີ້:** ຊົງໃຫ້ລາຍລະອຽດໃນການສ້າງພຣະວິຫານຂອງພຣະອົງ.
**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະເອົາກາຍຂອງເຮົານະມັສການພຣະເຈົ້າແນວໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອບອກໃຫ້ຮູ້ວ່າພຣະວິຫານຂອງພຣະເຈົ້າເປັນບ່ອນສັກສິດ.

## ບົດນຳ

ເນື່ອງຈາກວ່າພຣະຄັມພີສີດຳນັ້ນບໍ່ຄົບຂ້າພະເຈົ້າຈຶ່ງກ່າຍເອົາພຣະຄັມພີສບັບປີ 2000 ແດ່ ແລະລາງບ່ອນກໍໄດ້ກ່າຍມາຈາກພຣະຄັມພີພາສາລາວທີ່ຍັງເປັນ ໄມໂກຣຊອບຢູ່ ມາໃສ່ໃນບົດຮຽນນີ້ ດັ່ງນັ້ນພາສາຍ່ອມຈະມີຄວາມແຕກຕ່າງກັນ ແຕ່ມີໃຈຄວາມອັນດຽວກັນ.

ຖວາຍດ້ວຍເຕັມໃຈ (ອົບພະຍົບ 25:1-8).
ໃນສມັຍຊາວອິສຣາເອນເດີນທາງອອກຈາກເອຢິບບ່ອນທີ່ເຂົາເປັນຂ້າທາດນັ້ນ ເຂົາໄດ້ສ້າງຫໍເຕັນເພື່ອເປັນບ່ອນນະມັສການພຣະເຈົ້າເພາະທີ່ນັ້ນເປັນທີ່ສະຖິດຂອງອົງພຣະຜູ້ເປັນເຈົ້າ ແຕ່ການສ້າງນັ້ນບໍ່ແມ່ນຈະເຮັດຕາມໃຈຂອງນາຍຊ່າງ ແຕ່ແມ່ນຕາມນໍ້າພຣະທັຍ ແລະແຜນການຂອງພຣະເຈົ້າ. ໃນຫໍເຕັນນີ້ເອງພວກເຂົາໄດ້ຮັບຂໍ້ມູນໃນການເດີນທາງຊີວິດປະຈຳວັນຂອງພວກເຂົາ. ຫໍເຕັນນີ້ໄດ້ຊື່ວ່າຫໍເຕັນສັກສິດ ເພາະໃນຫໍເຕັນນັ້ນບັນຈຸດ້ວຍສິ່ງສັກສິດຫລາຍຢ່າງທີ່ກ່າວໄວ້ໃນ ຂໍ້ 23-30. ແຕ່ກ່ອນອື່ນເຮົາຕ້ອງເຂົ້າໃຈວ່າກ່ອນທີ່ຈະສ້າງຫໍເຕັນນີ້ພຣະເຈົ້າໄດ້ສັ່ງໃຫ້ໂມເຊຮັບເອົາເຄື່ອງຖວາຍອັນເຕັມໃຈຈາກປະຊາຊົນເພື່ອຈັດຕຽມສ້າງຫໍເຕັນນີ້ເພາະວ່າຫໍເຕັນ ຈະຕ້ອງສ້າງດ້ວຍຊັບສົມບັດຂອງປະຊາຊົນທີ່ນຳມາຖວາຍນັ້ນ (ອ່ານຂໍ້ 1-8).

**ໂຄງຮ່າງສ້າງພຣະວິຫານ** (ອົບພະຍົບ 25:9-11, 17-18, 23-24, 31-32; 26:1-2, 5-7; 27:1-2)
ຫໍເຕັນທີ່ຖືກສ້າງດ້ວຍຄວາມຣະມັດຣະວັງຕາມຂນາດສ່ວນທີ່ພຣະເຈົ້າຊົງໃຫ້ຂໍ້ມູນມານັ້ນກໍເພື່ອສະແດງເຖິງຄວາມຮອບຮູ້ຂອງພຣະອົງ, ໃນສມັຍນີ້ເຮົາຮ້ອງວ່າ Blueprint. (ແບບແຜນໂຄງຮ່າງການກໍ່ສ້າງ). ແຕ່ກໍບໍ່

ແມ່ນ Blueprint ແບບກັບນັກສະຖາປະນິກປະດິດຂຶ້ນມາໂດຍໃຊ້ເຄື່ອງຄອມພິວເຕີ ແລະໃຊ້ເວລາອັນຍາວນານ

ອີກ ພຣະອົງບໍ່ຈຳເປັນຈະຕ້ອງມາຄິດໄລ່ເລກແບບນັ້ນ ພຽງແຕ່ພຣະອົງເວົ້າອອກມາເທົ່ານັ້ນກໍເປັນການຖືກຕ້ອງຕາມຂນາດແລ້ວ. ສິ່ງທີ່ໜ້າສົນໃຈເປັນຢ່າງຍິ່ງນັ້ນແມ່ນເງິນຄຳທີ່ເຂົາເອົາມາຈາກປະເທດເອຢິບບ່ອນທີ່ເຂົາຖືກກົດຂີ່ຂົ່ມເຫງນັ້ນມາເປັນເຄື່ອງຖວາຍໃນການປຸກສ້າງ (11:2) ຫາກເຮົາເບິ່ງຮູບພາບແລ້ວແມ່ນການຕອບບຸນແທນຄຸນ ເພາະວ່າພຣະເຈົ້າຊົງໄຖ່ຈາກການເປັນຂ້ອຍຂ້າມາເປັນເອກຣາດ ຕ້ອງເອົາສິ່ງທີ່ມີນັ້ນກັບຄືນມາຖວາຍເພື່ອເອົາມາປະກອບສ່ວນໃນການສ້າງຫໍເຕັນ ເພື່ອພຣະອົງຈະສະຖິດຢູ່ທີ່ນັ້ນເພື່ອນຳທາງເຂົາຕໍ່ໄປ.

<u>**ບ່ອນພຣະເຈົ້າຊົງສະຖິດ**</u> (ອົບພະຍົບ 29:43-46).
ພຣະປະສົງຂອງພຣະເຈົ້າໃນການສ້າງຫໍເຕັນແມ່ນເພື່ອວ່າພຣະອົງຈະເປັນປະທານໃນການຊຸມນຸມນະມັສການຢູ່ທີ່ນັ້ນ ແລະເມື່ອປະຊາຊົນຂອງພຣະເຈົ້າມີການງານອັນໃດກໍໃຫ້ໄປຊຸມນຸມປຶກສາຫາລືກັນໃນຫໍເຕັນນັ້ນ ໃນທີ່ນັ້ນພຣະເຈົ້າໄດ້ແຕ່ງຕັ້ງທ່ານອາໂຣນໃຫ້ເປັນຜູ້ບົວຣະບັດຮັບໃຊ້ພຣະເຈົ້າ "*ເຮົາຈະແຕ່ງຕັ້ງອາໂຣນກັບພວກລູກຊາຍຂອງລາວ ໃຫ້ໃຊ້ຊີວິດຢູ່ຕ່າງຫາກ ເພື່ອບົວຣະບັດຮັບໃຊ້ເຮົາໃນຖານະປະໂຣຫິດ*" (ຂໍ້ 44). ເມື່ອອາໂຣນຖືກແຕ່ງຕັ້ງໃຫ້ເປັນປະໂຣຫິດທ່ານກໍຕ້ອງເປັນຜູ້ທີ່ທຸກຄົນນັບຖື ເພາະວ່າເພິ່ນຈະເປັນຜູ້ໃກ້ຊິດຮັບໃຊ້ພຣະເຈົ້າ, ດ້ວຍເຫດນີ້ການສື່ສານໃນຣະຫວ່າງພຣະເຈົ້າກັບປະຊາຊົນ ແລະການສື່ສານຣະຫວ່າງປະຊາຊົນກັບພຣະເຈົ້າແມ່ນຕ້ອງຜ່ານທ່ານອາໂຣນ. ພາບພົດຕອນນີ້ເຮັດໃຫ້ຂ້າພະເຈົ້າຄິດເຖິງເວລາຜູ້ໃດຜູ້ນຶ່ງຂຶ້ນສານໃນຫ້ອງສານນັ້ນທຸກຄົນໄດ້ແຕ່ນັ່ງຟັງ ສ່ວນຜູ້ທີ່ເວົ້ານັ້ນແມ່ນທະນາຍຄວາມ ແລະຜູ້ຕັດສິນຄວາມກໍນັ່ງຟັງຖ້າຟັງເຫດຟັງຜົນເພື່ອຈະຕັດສິນຄວາມ.

ໃນສມັຍພຣະຄັມເດີມນັ້ນຄົນທັງຫລາຍເຂົ້າໃຈວ່າ ພຣະເຈົ້າຊົງສະຖິດໃນພຣະວິຫານອັນສັກສິດເທົ່ານັ້ນ ດັ່ງນັ້ນເມື່ອມີການງານອັນໃດຈຶ່ງພາກັນໄປທີ່ພຣະວິຫານ, ຕໍ່ມາເມື່ອຄຣິສຕຽນຮຽນຮູ້ແລະເຂົ້າໃຈແລ້ວຈຶ່ງຮູ້ວ່າພຣະເຈົ້າຊົງສະຖິດຢູ່ທຸກບ່ອນ ແມ່ນແຕ່ບ້ານເຮືອນຂອງເຮົາພຣະເຈົ້າກໍຊົງຢູ່ດ້ວຍກັນກັບເຮົາຫາກເຮົາເຊື່ອໃນພຣະອົງ. ເມື່ອຄຣິສຕຽນເຮົາເຂົ້າໃຈແນວນັ້ນແລ້ວ ເຮົາກໍສົມຄວນຈະເຮັດໃຫ້ບ້ານເຮືອນຂອງເຮົາເປັນບ່ອນສັກສິດເພາະເປັນທີ່ສະຖິດຂອງພຣະເຈົ້າ. ເຮົາຈະຕ້ອງເລີ້ມດ້ວຍການໃຊ້ຊີວິດໃນບ້ານເຮືອນໃຫ້ເໝາະສົມກັບເປັນຜູ້ເຊື່ອໃນພຣະເຈົ້າ. ໃນພຣະທັມອົບພະຍົບ ຕອນນຶ່ງໄດ້ຊີ້ແຈງໃຫ້ເຫັນວ່າ ແມ່ນແຕ່ເທິງພູສູງບ່ອນທີ່ໂມເຊເຫັນໄຟໄໝ້ພຸ່ມໄມ້ນັ້ນກໍຍັງເປັນບ່ອນສັກສິດ ເມື່ອມີພຣະເຈົ້າສະຖິດຢູ່ *ເມື່ອພຣະຜູ້ເປັນເຈົ້າຊົງເຫັນໂມເຊຍ່າງເຂົ້າມາໃກ້ ພຣະອົງກໍຊົງເອີ້ນອອກມາຈາກພຸ່ມໄມ້ນັ້ນວ່າ, "ໂມເຊ, ໂມເຊເອີຍ!" ໂມເຊໄດ້ທູນຕອບວ່າ, "ຂ້າພຣະອົງຢູ່ທີ່ນີ້" ພຣະເຈົ້າຈຶ່ງຊົງບອກວ່າ, "ຢ່າຫຍັບເຂົ້າມາໃກ້ ຈົ່ງຖອດເກີບອອກເສັຽເພາະບ່ອນທີ່ເຈົ້າຢືນຢູ່ນີ້ເປັນບ່ອນສັກສິດ*" (ອົພະຍົບ 3:3-4). ນອກນັ້ນພຣະເຈົ້າຍັງສະຖິດກັບຜູ້ທີ່ເຊື່ອໃນພຣະອົງອີກ ເພາະວ່າຮ່າງກາຍຂອງເຮົາເປັນພຣະວິຫານພຣະເຈົ້າ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# <u>ບົດຮຽນ 12</u>
# ເມື່ອບໍ່ຍອມເຊື່ອຟັງ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ອົບພະຍົບ 32:1-19, 30-33; 3312-17; 34-7
**<u>ພູມຫລັງຂອງພຣະຄັມພີ:</u>** ອົບພະຍົບ 32--34
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເມື່ອປະຊົນບໍ່ຍອມເຊື່ອຟັງ ພຣະເຈົ້າຈຶ່ງລົງໂທດ ແຕ່ໃຫ້ໂອກາດອີກ ຫລັງຈາກໂມເຊອອນຂໍ.
**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານຈະໄຫວ້ວອນພຣະເຈົ້າເພື່ອຜູ້ໃດແດ່?
**<u>ຈຸດປະສົງຂອງບົດຮຽນ</u>:** ພຣະເຈົ້າໄດ້ປ່ອຍປະໃຫ້ເຂົາເຮັດຕາມຝ່າຍເນື້ອໜັງ ແຕ່ຫລັງຈາກໂມເຊອອນຂໍພຣະເຈົ້າກໍຟັງສຽງເພິ່ນ.

## <u>ບົດນຳ</u>

ບົດຮຽນເຣື່ອງອິສຣາເອນສ້າງງົວຄຳແທນພຣະເຈົ້າເພາະເຂົາລໍຖ້າໂມເຊດົນໂພດ ມັນໄດ້ສະທ້ອນເຖິງຄຣິສຕຽນວັນນີ້ທີ່ໜີໄປຂາບໄຫວ້ພຣະທຽມ ເພາະລໍຖ້າພຣະເຈົ້າບໍ່ມາຈັກເທື່ອ ແຕ່ຜູ້ຮັບໃຊ້ພຣະເຈົ້າທຸກຄົນມີໜ້າທີ່ທູນຂໍພຣະເຈົ້າໃຫ້ພຣະອົງໃຫ້ໂອກາດເຂົາອີກຄັ້ງນຶ່ງ.

### ລືມຄຳສັນຍາ (32:1-10).

1. ໂມເຊໄດ້ຂຶ້ນໄປພູສູງເປັນເວລາ 40 ວັນເພື່ອຮັບຟັງແຜນການຂອງພຣະເຈົ້າໃນ 24:14-18 ແຕ່ກ່ອນເພິ່ນຈະຂຶ້ນໄປນັ້ນເພິ່ນໄດ້ສັ່ງອິສຣາເອນໃຫ້ລໍຖ້າຢູ່ໃນຄ້າຍພັກນີ້ ແລະມອບໜ້າທີ່ການນຳໃຫ້ທ່ານອາໂຣນແລະຮູເລ "*ຈົ່ງລໍຖ້າເຮົາຢູ່ຄ້າຍພັກນີ້ ຈົນກວ່າພວກເຮົາຈະກັບມາອາໂຣນກັບຮູເລຈະຢູ່ທີ່ນີ້ກັບພວກເຈົ້າ ຖ້າມີເຣື່ອງຫຍັງເກີດຂຶ້ນ ກໍໃຫ້ໄປຫາທ່ານທັງສອງໄກ່ເກັ່ຽໃຫ້*" (24:14).

2. ທີ່ເທິງພູເຂົາ ໂມເຊໄດ້ຮັບຫີນສອງແຜ່ນເປັນຄຳສັນຍາຂອງອົງພຣະຜູ້ເປັນເຈົ້າ, ແຕ່ທີ່ຄ້າຍພັກມີການຫວຸ້ນວາຍຄືພວກອິສຣາເອນໄປຫາແລະຂົ່ມຂູ່ທ່ານອາໂຣນ ເວົ້າວ່າ, "*ຈົ່ງສ້າງຮູບພຣະສຳລັບນຳຫນ້າພວກເຮົາໄປເທາະ ດ້ວຍວ່າໂມເຊຄົນທີ່ນຳພວກເຮົາອອກຈາກປະເທດເອຢິບນັ້ນ ພວກເຮົາບໍ່ຮູ້ວ່າທ່ານເປັນຫຍັງໄປເສັຽແລ້ວ?*" (32:1).

3. ພຣະເຈົ້າຊົງໂກດຮ້າຍທີ່ອິສຣາເອນເອົາຮູບປັ້ນງົວຄຳມາແທນພຣະອົງ ຈຶ່ງກ່າວກັບໂມເຊວ່າ "*ເຮົາຮູ້ປະຊາຊົນພວກນີ້ດີ ເຂົາເປັນຄົນຫົວດື້ ບັດນີ້ ປ່ອຍໃຫ້ເປັນຫນ້າທີ່ຂອງເຮົາ ເຮົາຈະທຳລາຍເຂົາດ້ວຍຄວາມ*

*ໂກດຂອງເຮົາ"* (ຂໍ້ 10ກ).

## ໂມເຊຂໍຮ້ອງພຣະເຈົ້າ (32:12-17; 34;1-7).

1. ໂມເຊຕົກໃຈຢ່າງໃຫຍ່ເມື່ອໄດ້ຍິນພຣະເຈົ້າເວົ້າວ່າພຣະອົງຈະທຳລາຍອິສຣາເອນດ້ວຍຄວາມໂກດຮ້າຍຂອງພຣະອົງ ແລ້ວໂມເຊຈຶ່ງຟ້າວທູນຂໍພຣະເຈົ້າວ່າ *"ຂ້າແດ່ພຣະຜູ້ເປັນເຈົ້າ ດ້ວຍເຫດໃດພຣະອົງຈຶ່ງປ່ອຍໃຫ້ພຣະພິໂຣດຂອງພຣະອົງລຸກໄຫມ້ໄພ່ພົນຂອງພຣະອົງ ຊຶ່ງແມ່ນພຣະອົງໄດ້ຊົງນຳເຂົາອອກມາຈາກປະເທດເອຢິບດ້ວຍຄວາມຍິ່ງໃຫຍ່ແລະຣິດທານຸພາບ ພຣະອົງຢາກຈະໃຫ້ຊາວເອຢິບເວົ້າຫລືວ່າພຣະອົງໄດ້ຊົງນຳເຂົາອອກມາຈາກເອຢິບດ້ວຍເຈດຕະນາຮ້າຍ ຄືເພື່ອປະຫານຊີວິດແລະທຳລາຍເຂົາໃຫ້ຕາຍຫມົດຢູ່ເທິງພູ ຂໍພຣະອົງຊົງຄາຍພຣະພິໂຣດອັນແຮງກ້າຂອງພຣະອົງເສັຽກ່ອນ ແລະ<u>ຊົງປ່ຽນພຣະທັຍ</u> ຢ່ານຳພັຍວິບັດຢ່າງນີ້ມາສູ່ໄພ່ພົນຂອງພຣະອົງທ້ອນ"* (ຂໍ 11-12). ການຂໍຮ້ອງໂມເຊເປັນບົດຮຽນອັນຍິ່ງໃຫຍ່ໃຫ້ເຮົາທູນຂໍພຣະເຈົ້າບໍ່ຟ້າວລົງໂທດຄົນທີ່ຫລົງທາງ ແລະຄົນດື້ດ້ານບໍ່ຍອມເຊື່ອຟັງ.

2. ພຣະເຢຊູເປັນແບບຢ່າງດ້ວຍຄຳອຸປະມາຂອງພຣະອົງເຣື່ອງຕົ້ນໝາກເດື່ອບໍ່ເກີດໝາກ (ລູກາ 13:6-9).

## ເກືອບມີຊີວິດຢ່າງໂລກ (33:1-17; 34:1-7).

1. ພຣະເຈົ້າຮັບຟັງຄຳໄຫວ້ວອນຂໍຂອງໂມເຊແທນອິສຣາເອນ ຍ້ອນວ່າພຣະອົງຊົງເປັນພຣະເຈົ້າທີ່ມີຄວາມຮັກ, ຄວາມເມຕາສົງສານ ເມື່ອວອນຕໍ່ພຣະອົງ. (ພຣະເຈົ້າບໍ່ປ່ຽນພຣະທັຍ ຫລືປ່ຽນໃຈ).

2. ພຣະເຈົ້າຊົງສັ່ງໂມເຊໃຫ້ເຄື່ອນຍ້າຍອິສຣາເອນໄປຍັງແຜ່ນດິນທີ່ພຣະເຈົ້າຊົງຈັດຕຽມໄວ້ໃຫ້ ແຕ່ພຣະເຈົ້າຈະບໍ່ໄປນຳເຂົາ. *"ແຕ່ເຮົາເອງຈະບໍ່ໄປກັບພວກເຈົ້າ ເພາະພວກເຈົ້າເປັນປະຊາຊົນທີ່ວດື້ ຖ້າເຮົາໄປເຮົາອາດຈະທຳຮ້າຍພວກເຈົ້າໃນກາງທາງ "* (33:3).

3. ເມື່ອເປັນເຊັ່ນນັ້ນໂມເຊໄດ້ເວົ້າກັບອິສຣາເອນອີກເທື່ອນຶ່ງວ່າ *"ພວກເຈົ້າໄດ້ເຮັດບາບຢ່າງຮ້າຍແຮງ ບັດນີ້ເຮົາຈະຂຶ້ນໄປເຝົ້າພຣະຜູ້ເປັນເຈົ້າຢູ່ເທິງພູ ບາງທີເຮົາອາດສາມາດໄຖ່ບາບໃຫ້ພວກເຈົ້າໄດ້"* (32:30). ແປວ່າໂມເຊຈະຂຶ້ນໄປເທິງພູເພື່ອຖວາຍຂໍການຍົກໂທດຄວາມຜິດບາບຄັ້ງນີ້.

4. ເມື່ອໂມເຊພົບກັບພຣະເຈົ້າທີ່ເທິງພູ ພຣະເຈົ້າກ່າວກັບໂມເຊວ່າ *"ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາປານີ ຜູ້ບໍ່ໂກດຮ້າຍງ່າຍ ແລະຜູ້ສະແດງຄວາມຮັກຫມັ້ນຄົງ ແລະຄວາມສັດຊື່ ເຮົາຮັກສາຄຳພັນສັນຍາຂອງເຮົາຕລອດໄປ ເຖິງພັນຊົ່ວເຊັ່ນຄົນ ທັງຍົກຜິດຍົກບາບໃຫ້ດ້ວຍແຕ່ເຮົາບໍ່ອາດລືມລົງໂທດລູກຫລານ ຂອງຜູ້ທີ່ເຮັດບາບຕໍ່ສູ້ເຮົາ ເຖິງສາມແລະສີ່ຊົ່ວຄົນ"*. (34:6-7).

*ທວ*

# ຄຳແນະນຳສຳລັບຄຣູສອນ

## ບົດຮຽນ 13

## ທຸກຢ່າງເພື່ອສັຣເສີນພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 35:4-10, 20-35; 36:2-7

**ພູມຫລັງຂອງພຣະຄັມພີ:** ອົບພະຍົບ 35:1--36:7

**ຈຸດສຳຄັນຂອງບົດຮຽນນີ້:** ທ່ານຈະຖວາຍຫຍັງແດ່ເພື່ອພາຣະກິດຂອງພຣະເຈົ້າ?

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານໄດ້ຖວາຍເພື່ອພຣະຣາຊກິດຫລາຍປານໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ອຍໃຫ້ເຂົ້າໃຈວ່າພຣະວິຫານຖືກສ້າງກໍຍ້ອນການຖວາຍຂອງປະຊົນຂອງພຣະເຈົ້າ.

## ບົດນຳ

ພຣະເຈົ້າໄດ້ສັ່ງອິສຣາເອນໃຫ້ປຸກຫໍຜ້າເຕັນທຸກບ່ອນທີ່ເຂົາເດີນທາງໄປເພື່ອເປັນບ່ອນນະມັສການ, ເປັນບ່ອນຊຸມນຸມປະຊາຊົນຂອງພຣະຈົ້າໃນວຽກງານຕ່າງໆ ໃນການສ້າງນີ້ຕ້ອງມີຣະບຽບວິທີອອກແບບມາຈາກພຣະເຈົ້າເທົ່ານັ້ນ ແມ່ນແຕ່ເຄື່ອງນຸ່ງຂອງປະໂຣຫິດ ທີ່ມີຊື່ວ່າ (ອີໂຟດ) ນັ້ນຈະຕ້ອງຕັດຫຍິບຕາມແບບແຜນຂອງພຣະເຈົ້າ.

## ຕຽມການສ້າງຫໍເຕັນ 35:4-10

1. ຫລັງຈາກໂມເຊເຂົ້າເຝົ້າພຣະເຈົ້າທີ່ເທິງພູສູງແລ້ວເພິ່ນຈຶ່ງລົງມາຫາປະຊາຊົນເພື່ອບອກເລົ່າສິ່ງທີ່ພຣະເຈົ້າຊົງເວົ້າກັບເພິ່ນທີ່ເທິງພູ, ສິ່ງສຳຄັນຕອນນີ້ແມ່ນການສ້າງຫໍເຕັນເຊິ່ງເປັນບ່ອນພຣະເຈົ້າຊົງສະຖິດໃຫ້ອິສຣາເອນໄດ້ມານະມັສການ ດັ່ງນັ້ນໂມເຊຈຶ່ງປ່າວປະກາດໃຫ້ປະຊາຊົນນຳເອົາສິ່ງທີ່ເຂົານຳເອົາຕິດຕົວມາເປັນບາງຢ່າງມາຖວາຍເພື່ອການປຸກສ້າງຫໍເຕັນ. ເຄື່ອງທີ່ຈະຕ້ອງນຳມາຖວາຍໃຫ້ອ່ານ ຂໍ້ 5-9.

2. ເລົ່າເຣື່ອງການຖວາຍຂອງໂບດເຂດຊົນນະບົດໃນບົດຮຽນ ວັກນຶ່ງ ຂອງບົດຮຽນນີ້.

3. ອາທິບາຍເຖິງການຖວາຍຂອງຄົນເຮັດການແລະຄົນບໍ່ເຮັດການ ພຣະເຈົ້າຊົງພໍພຣະທັຍຄືກັນເມື່ອຖວາຍດ້ວຍໃຈສັດທາ.

## <u>ການຖວາຍຂອງປະຊາຊົນ</u> (35:20-36).

1. ອ່ານ ຂໍ້ 21 *"ແລະທຸກຄົນທີ່ມີໃຈເຫຼື້ອມໃສສັດທາ ກໍໄດ້ນໍາຂອງມາຖວາຍແກ່ພຣະຜູ້ເປັນເຈົ້າເພື່ອນໍາໄປສ້າງຫໍເຕັນບ່ອນພຣະອົງຊົງສະຖິດຢູ່ ພວກເຂົາໄດ້ນໍາທຸກສິ່ງທີ່ຈໍາເປັນໃຊ້ໃນການນະມັສການ ແລະໃນການເຮັດເຄື່ອງນຸ່ງປະຈໍາຕໍາແໜ່ງຂອງປະໂຣຫິດມາຖວາຍແກ່ພຣະຜູ້ເປັນເຈົ້າ "* ແປວ່າເຮົາຕ້ອງຖວາຍດ້ວຍຄວາມເຕັມໃຈ.

2. ອະທິບາຍ (ອີໂຟດ) ທີ່ພຣະຄັມພີລາວສະບັບປີ 2000 ເວົ້າວ່າ ເຄື່ອງປະຈໍາຕໍາແໜ່ງ (*ແມ່ນພາສາເມືອງລາວ*), ຫລືບາງທີ່ເຮົາອາດຮ້ອງເຄື່ອງນັ້ນວ່າເຄື່ອງແບບຂອງປະໂຣຫິດເພື່ອນຸ່ງຊຸດນີ້ໃນການນໍາພາປະຊາຊົນເຂົ້າເຝົ້າພຣະເຈົ້າທີ່ຮ້ອງວ່າ (Holy Garments) . ທ່ານສາມາດຊອກພິມເອົາຮູບເຄື່ອງແບບນີ້ຕາມ online ໄດ້, ໃຫ້ພິມວ່າ Ephod ແລ້ວນໍາມາໃຫ້ນັກຮຽນເຫັນທີ່ຫ້ອງຮຽນກໍເປັນການດີ.

3. ພຣະເຈົ້າໃຫ້ໂມເຊແຕ່ງຕັ້ງ *" ເບຊາເລນ ບຸດອູຣີ ຜູ້ເປັນບຸດຂອງເຮີເຜົ່າຢູດາ ແລະພຣະອົງໄດ້ຊົງໃຫ້ຜູ້ນັ້ນປະກອບດ້ວຍພຣະວິນຍານຂອງພຣະເຈົ້າໃຫ້ມີສະຕິປັນຍາແລະຄວາມເຂົ້າໃຈ ແລະຄວາມຮູ້ໃນການຊ່າງສີມືຕ່າງໆພື່ອຈະຄິດປະດິດລວດລາຍຢ່າງສລາດ ເຮັດດ້ວຍທອງຄໍາ ແລະເງິນ ແລະທອງສໍາລິດ "* (ຂໍ້ 30-33). ເພື່ອງານປານິດ, ເມື່ອພຣະເຈົ້າແຕ່ງຕັ້ງແລ້ວພຣະອົງກໍອວຍພອນໃຫ້ມີຄວາມສາມາດເຮັດໄດ້.

## <u>ຈົນເຫລືອໃຊ້</u> (36:2-7).

1. ປະຊາຊົນນໍາຂອງມາຖວາຍທຸກເຊົ້າຈົນເຫລືອຄວາມຕ້ອງການ ຫລືຫລາຍເກີນໄປຈົນອາດບໍ່ມີບ່ອນເກັບມ້ຽນ. (ຂໍ້ 3).

2. ໂມເຊຈຶ່ງປະກາດບໍ່ຮັບການຖວາຍອີກແລ້ວ *"ຢ່າໃຫ້ຊາຍຍິງເອົາຂອງສໍາລັບທໍາສະຖານທີ່ນະມັສການມາຖວາຍອີກເລີຍ" ເຫດສະນັ້ນປະຊາຊົນຈຶ່ງຢັບຢັ້ງບໍ່ເອົາຂອງມາຖວາຍອີກເພາະຂອງທີ່ເຂົາມີຢູ່ແລ້ວກໍພໍ ແລະຍັງມີເຫລືອອີກ "* (ຂໍ້ 6-7).

3. ເລົ່າເຣື່ອງ ດຣ. ບຽວ ສະກາ ທີ່ກໍາລັງສ້າງໂບດໃໝ່ນັ້ນ ມັນກົງກັນຂ້າມກັບການຖວາຍຂອງອິສຣາເອນແນວໃດ?

4. ຖາມນັກຮຽນ ການຖວາຍຂອງທ່ານເປັນແນວໃດ? ແລ້ວອ້ອນວອນປິດ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນ 14
## ເມື່ອຮຽບຮ້ອຍຈຶ່ງກ້າວຕໍ່ໄປ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 39:32, 42-43; 40:1-2, 16-17, 32-38
**ພູມຫລັງຂອງພຣະຄັມພີ:** ອົບພະຍົບ 39:32--40:38
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອອິສຣາເອນສ້າງຫໍເຕັນແລ້ວພຣະເຈົ້າກໍນຳພາເຂົາເດີນຕໍ່ໄປ.
**ຄຳຖາມເພື່ອການຄົ້ນຄວ້າ:** ພຣະເຈົ້າລໍຖ້າເຂົາເຮັດຫຍັງສຳເຣັດກ່ອນນຳເຂົາເດີນໜ້າຕໍ່ໄປ?
**ຈຸດປະສົງຂອງບົດຮຽນ:** ເມື່ອສຳເຣັດການສ້າງຫໍເຕັນຂັ້ນຕົ້ນຈຶ່ງຊົງນຳເຂົາໄປແຜ່ນດິນທີ່ຊົງສັນຍາ.

## ບົດນຳ

ບົດຮຽນວັນນີ້ຈະເນັ້ນໜັກສີ່ປະການດັ່ງນີ້; 1. ເຄື່ອງນຸ່ງຂອງປະໂລຫິດທີ່ມີຊື່ວ່າເອໂຟດ ຈະຕ້ອງນຸ່ງເວລາປະໂລຫິດນຳປະຊາຊົນເຂົ້າເຝົ້າພຣະເຈົ້າ. 2. ໜ້າທີ່ມອບໝາຍໃຊ້ໂມເຊໃນການສ້າງຫໍເຕັນ. 3. ຊົງແຕ່ງຕັ້ງວັນຈາຣຶກໃນການໄຖ່ໃຫ້ພົ້ນຈາກຊີວິດຂ້າທາດ. 4. ຊົງຢູ່ກັບປະຊາຊົນຂອງພຣະອົງ.

1. ໃຫ້ຊອກເອົາຮູບ Ephod ຈາກ ຮ້ານຂາຍສມຸດຄຣິສຕຽນ ຫລືເອົານຳ ອິນເຕີແນັດ ມາຍັງຫ້ອງຮຽນ.
   ກ. ອ່ານພຣະທັມອົບພະຍົບ 28 ແລ້ວຈະເຫັນຄວາມສຳຄັນຂອງເຄື່ອງ ເອໂຟດຊຸດນີ້.
   ຂ. ເມັດແກ້ວ (stone) 12 ອັນທີ່ໜ້າເອິກອັນໝາຍເຖິງອິສຣາເອນສິບສອງຕະກຸນຢູ່ຕໍ່ໜ້າພຣະເຈົ້າ.
   ຄ. ເຄື່ອງ ເອໂຟດ ມີຄວາມໝາຍອີກຢ່າງໜຶ່ງແມ່ນ ຜູ້ຮັບໃຊ້ຕ້ອງເປັນຄົນມີຣະບຽບການນຸ່ງຖື.

2. ຊຸດເອໂຟດ ນັ້ນປະໂຣຫິດພຽງຜູ້ດຽວທີ່ຈະຕ້ອງສວມໃສ່ເວລາເຂົ້າເຝົ້ານະມັສການເທົ່ານັ້ນ. ແລະກໍເປັນຜູ້ດຽວທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປຜ້າກັ້ງຊັ້ນໃນໆຂະນະທີ່ຜູ້ນະມັສການທັງຫລາຍແມ່ນລໍຢູ່ນອກຜ້າກັ້ງ.

### 2. <u>ວຽກງານສ້າງຫໍເຕັນສຳເຣັດ</u> (39:32-43).

1. ງານສຳຄັນທີ່ພຣະເຈົ້າມອບໃຫ້ໂມເຊນັ້ນແມ່ນງານສ້າງຫໍເຕັນ, ດັ່ງນັ້ນໂມເຊມີໜ້າທີ່ຊັກຊວນຊາວອິສຣາເອນຕ້ອງສ້າງຫໍເຕັນນີ້ໃຫ້ສຳເຣັດ ແລະໃຫ້ຖືກຕ້ອງຕາມແບບແຜນກຳໜົດຂອງພຣະເຈົ້າ. ບອກນັກຮຽນວ່າເຮົາເປັນຜູ້ນຳຄຣິສຕຽນ ເຮົາມີໜ້າທີ່ຄ້າຍຄືໂມເຊ ເຮົາຈະຕ້ອງຊັກຊວນຄຣິສຕຽນໃຫ້ປະຕິບັດຕາມການຊົງນຳຂອງອົງພຣະຜູ້ເປັນເຈົ້າ.

2. ໂມເຊໄດ້ສຳຣວດກວດກາຫໍເຕັນຫລັງຈາກສ້າງຮຽບຮ້ອຍແລ້ວ, ເມື່ອທ່ານເຫັນວ່າຖືກຕ້ອງແລ້ວ ຈຶ່ງອວຍພອນປະຊາຊົນ. ບົດຮຽນນີ້ໄດ້ນຳມາຈົນເຖິງວັນນີ້ຄື; ເມື່ອເຮົາປຸກສ້າງເຮືອນຮຽບຮ້ອຍທາງເມືອງ ຈະສົ່ງເຈົ້າໜ້າທີ່ກ່ຽວຂອງມາກວດ Inspection ຫາກລາວເຫັນວ່າຖືກຕ້ອງແລ້ວ ລາວຈຶ່ງເຊັນເອກະສານ ຜ່ານການກວດສອບໃຫ້ ຈຶ່ງຖືວ່າຖືກຕ້ອງຕາມກົດໝາຍ.

3. ຖາມນັກຮຽນ, ທ່ານມາໂບດນີ້ທ່ານເຄີຍຄິດຮັບໃຊ້ພຣະເຈົ້າແນວໃດແນວນຶ່ງຢູ່ບໍ່? ຫລືບາງທ່ານ ທີ່ໄດ້ຮັບໜ້າທີ່ຮັບໃຊ້ທ່ານໄດ້ເຮັດໜ້າທີ່ຂອງທ່ານຄືໂມເຊຢ່າງໃດ?

## <u>ຊົງແຕ່ງຕັ້ງວັນເດືອນສຳຄັນ</u> (40:1-2).

ກ. ພຣະເຈົ້າໄດ້ຊົງສັ່ງແຕ່ງຕັ້ງວັນສຳຄັນດັ່ງນີ້ *"ນມື້ທຳອິດຂອງເດືອນທີນຶ່ງ ຈົ່ງຕັ້ງຫໍເຕັນບ່ອນພຣະຜູ້ເປັນເຈົ້າສະຖິດຢູ່ຂຶ້ນ "*(40:2). ການແຕ່ງຕັ້ງເພື່ອໃຫ້ເຂົາຈົດຈຳການຊົງໄຖ່ຈາກຊີວິດຂອງຂ້າທາດ.

ຂ. ວັນນີ້ຈະຊ່ອຍຕັກເຕືອນໃຫ້ເຂົາເປັນຊົນຊາດທີ່ຖ່ອມຕົວ ແລະຮູ້ຈັກພຣະຄຸນ.

ຄ. ແລ້ວໂມເຊກໍໄດ້ເຮັດຕາມພຣະເຈົ້າຊົງສັ່ງທຸກປະການ *"ໂມເຊກໍໄດ້ເຮັດທຸກສິ່ງຕາມທີ່ພຣະເຈົ້າສັ່ງໄວ້ ດັ່ງນັ້ນໃນມື້ທຳອິດຂອງເດືອນທີນຶ່ງຂອງປີທີສອງ ຫລັງຈາກພວກເຂົາໄດ້ອອກມາຈາກເອຢິບ ພວກເຂົາກໍໄດ້ຕັ້ງຫໍເຕັນບ່ອນພຣະຜູເປັນເຈົ້າສະຖິດຢູ່ຂຶ້ນ "*(40:16-17).

## <u>ຊົງສະຖິດກັບອິສຣະເອນ</u> ( 40:34-38).

1. *"ຕໍ່ມາເມກໄດ້ມາປົກຄຸມຫໍເຕັນ ແລະແສງສຸກໃສແຫ່ງສະງ່າຣາສີຂອງພຣະຜູ້ເປັນເຈົ້າ ກໍປົກເຕັມຢູ່ທີ່ຫໍເຕັນນັ້ນ ໂມເຊເຂົ້າໄປໃນຫໍເຕັນບໍ່ໄດ້ ເພາະທີ່ນັ້ນເມກໜາແໜ້ນຫລາຍ "*(ຂໍ້ 34). ພຣະເຈົ້າເປັນເໝືອນເມກປົກຄຸມຫໍເຕັນໃນວັນເວລາທີ່ມີອາກາດສົດໃສຊ່ອງແຈ້ງທົ່ວທຸກບ່ອນ, ມາບັດນີ້ຊາວອິສຣາເອນຮູ້ແນ່ແກ່ໃຈແລ້ວວ່າເຂົາມີອົງພຣະຜູ້ເປັນເຈົ້າຊົງຢູ່ນຳເຂົາ.

2. *"ຊາວອິຣາເອນໄດ້ເຄື່ອນຍ້າຍຄ້າຍພັກຂອງພວກເຂົາໄປສູ່ທີ່ອື່ນ ກໍຕໍ່ເມື່ອເມກໝອກໄດ້ຫາຍໄປຈາກຫໍເຕັນ ຕາບໃດກ້ອນເມກທີ່ປົກຄຸມຢູ່ທີ່ນັ້ນ ພວກເຂົາບໍ່ໄດ້ອອກເດີນທາງ ໄປຍັງທີ່ອື່ນເດັດຂາດ "*(ຂໍ້ 36-37). ຊາວອິສຣາເອນໄດ້ປະຕິບັດຕາມພຣະເຈົ້າຢ່າງເຄັ່ງຄັດ ຄືເມື່ອເມກຢຸດເຂົາກໍຢຸດ, ເມື່ອເມກເຄື່ອນຍ້າຍເຂົາກໍເດີນທາງຕໍ່ໄປ. ເຣື່ອງນີ້ສອນໃຫ້ຄຣິສຕຽນວັນນີ້ຄວນຈະຕິດຕາມພຣະເຈົ້າເໝືອນດັ່ງຊາວອິສຣາເອນນີ້.

*ຫວ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນອີສເຕີ
## ຢ່າຊູ່ຢ້ານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 28:1-10

**ພູມຫລັງຂອງພຣະຄັມພີ:** ມັດທາຍ 28

**ຈຸດສຳຄັນຂອງບົດຮຽນນີ້:** ໃຫ້ເຮົາມີຄວາມຊົມຊື່ນຍິນດີ ທີ່ພຣະເຢຊູຄືນມາຈາກຕາຍ ແລະ ເຮົາບໍ່ຕ້ອງຢ້ານອັນໃດອີກຕໍ່ໄປ.

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານມີຄວາມຢ້ານກົວອັນໃດ ແທນທີ່ເຮົາຈະຍິນດີໃນພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເປັນຫຍັງການຄືນມາຈາກຕາຍຂອງພຣະເຢຊູຈຶ່ງໃຫ້ເຮົາເຊົາຢ້ານ ແລະມີຊີວິດທີ່ເຕັມລົ້ນດ້ວຍຄວາມມີຄຸນຄ່າຂອງຊີວິດ.

## ບົດນຳ

ອີສເຕີ ອັນໝາຍເຖິງວັນຄືນພຣະຊົນຂອງພຣະເຢຊູ ຈຶ່ງເປັນວັນສຳຄັນຕໍ່ຄວາມເຊື່ອຂອງຄຣິສຕຽນທົ່ວໂລກ ເພາະວ່າບໍ່ມີພຣະໃດໆທີ່ຕາຍແລ້ວຄືນມາມີຊີວິດອີກນອກຈາກພຣະເຢຊູເທົ່ານັ້ນ ແລະເມື່ອຄືນມາຈາກຕາຍ ແລ້ວພຣະອົງກໍສະເດັດຂຶ້ນໄປສວັນທັງເປັນ. ດ້ວຍເຫດນີ້ແຫລະຄຣິສຕຽນຈຶ່ງບໍ່ລະອາຍທີ່ຈະປະກາດຂ່າວ ປະເສີດເຣື່ອງພຣະເຢຊູ.

## ຍ່າງໄປປ່າຊ້າ (28:1-4).

1. ເວົ້າເຖິງອຸບໂມງຝັງສົບ ແປວ່າ ປ່າຊ້າຕາມພາສາຂອງພວກຜູ້ເຖົ້າເວົ້າກັນ, ເວົ້າເຖິງປ່າຊ້າທີ່ລາວໃນສມັຍກ່ອນ ຄືນເຮົາມີຄວາມຮູ້ສຶກແນວໃດຕໍ່ປ່າຊ້າໂດຍສະເພາະຍາມກາງຄືນ.

2. ເລົ່າເຖິງນາງມາຣີອາ ໄທມັກດາຣາ ແລະຜູ້ຍິງອື່ນໄປອຸບໂມງຝັງສົບພຣະເຢຊູແຕ່ເຊົ້າມືດມີຈຸດປະສົງຈະໄປທົດສົງສົບ, ພວກແມ່ຍິງເຫລົ່ານີ້ຢ້ານອັນໃດແດ່ໃຫ້ນັກຮຽນເລົ່າສູ່ຟັງ?

3. ເລົ່າປະຫວັດສາດນາງມາຣີອາ ໄທມັກດາຣາມີຜີເຈັດໂຕເຂົ້າສິງ, ພຣະເຢຊູໄດ້ຊ່ອຍລາວໃຫ້ພົ້ນ (ອ່ານໂຢຮັນ 20:1)

## <u>ພົບຄວາມໜ້າຢ້ານ</u> (28:5-7).

1. ເມື່ອມາຣີອາ ແລະພວກແມ່ຍິ່ງອື່ນໄປເຖິງອຸບໂມງໄດ້ເກີດແຜ່ນດິນໄຫວ, ພວກທະຫານຢ້ານຫລາຍຈົນແຂງກະດ້າງເປັນຄືຄົນຕາຍ ສ່ວນພວກແມ່ຍິງກໍຢ້ານຢູ່ແຕ່ບໍ່ໄດ້ຢ້ານຈົນແຂງກະດ້າງຄືຄົນຕາຍ.

2. ພວກແມ່ຍິງເຫັນເທວະດາ ແລະເທວະດາສົນທະນາກັບເຂົາ ເວົ້າວ່າ "ຢ່າຊູ່ຢ້ານ" ເພາະເທວະດາຮູ້ແລະເຫັນພວກນາງຢ້ານຈຶ່ງເວົ້າອອກມາເພື່ອເລົ້າໂລມໃຈບໍ່ໃຫ້ຢ້ານ.

3. ເທວະດາຮູ້ວ່າພວກແມ່ຍິງເຫລົ່ານີ້ມາຫາພຣະເຢຊູ ແລ້ວຈຶ່ງບອກພວກແມ່ຍິງວ່າພຣະອົງບໍ່ຢູ່ທີ່ນີ້ແລ້ວ ຫລືພຣະອົງໄປແລ້ວ ສະແດງວ່າພຣະອົງອອກໄປກ່ອນເທວະດາກິ້ງຫີນອອກ. ສລຸບຄໍາເວົ້າຂອງເທວະດາມີດັ່ງນີ້;

1. ພຣະອົງບໍ່ຢູ່ທີ່ນີ້.
2. ພຣະອົງຊົງເປັນຄືນມາແລ້ວ.
3. ທີ່ພຣະອົງຊົງກ່າວວ່າວັນຖ້ວນສາມພຣະອົງຈະຄືນມານັ້ນໄດ້ເປັນຈິງ.
4. ເຊີນພວກຜູ້ຍິງເຂົ້າໄປພິສູດເບິ່ງບ່ອນເຂົາວາງສົບ, ແຕ່ເທວະດາເວົ້າວ່າບ່ອນພຣະອົງນອນນັ້ນຫວ້າງເປົ່າ.
5. ຊົງບອກແມ່ຍິງວ່າ ພຣະອົງໄປຍັງແຂວງຄາລີເລ ແລະໃຫ້ແມ່ຍິງຟ້າວໄປບອກສາວົກອີກດ້ວຍ.

## <u>ດີໃຈທີ່ພົບກັນອີກ</u> (28:8-10).

1. ເມື່ອພວກແມ່ຍິງກໍາລັງຈະໄປນັ້ນພຣະເຢຊູຊົງປາກົດຕົວກັບເຂົາ ໂດຍຊົງກ່າວວ່າ" *ຈົ່ງຈະເຣີນເທີ້ນ*" ເປັນຄໍາອວຍພອນຜູ້ຊອກສແວງຫາພຣະອົງ.

2. ພວກນາງກົ້ມຂາບນະມັສການພຣະອົງຕາມທໍານຽມຂອງຊາດຍິວໂຄຣົບພຣະມະຫາກະສັດ. (ປະຫວັດສາດກະສັດສອງ 4:37).

3. ພຣະອົງຊົງມອບງານອັນສໍາຄັນໃຫ້ພວກແມ່ຍິງຄືໃຫ້ໄປບອກພວກສາວົກໃຫ້ໄປພົບກັບພຣະອົງທີ່ແຂວງຄາລີເລ.
4. ຊັກຊວນແລະບອກຖາມນັກຮຽນວ່າ ພຣະເຢຊູໄດ້ມອບຂ່າວການຄືນມາຈາກຕາຍໃຫ້ພວກຜູ້ຍິງໄປບອກພວກສາວົກ ຈົນໄດ້ສາຍານາມວ່າເປັນຄົນກຸ່ມທໍາອິດໄປບອກຜູ້ອື່ນເຣື່ອງການຄືນພຣະຊົນ, ສໍາລັບທ່ານເດ ພຣະອົງຊົງມອບວຽກງານອັນໃດໃຫ້ທ່ານ? ແລະໃຫ້ໄປບອກຜູ້ໃດ?

*ຫວ*